# ປະເທດລາວຕ້ອງເປັນຂອງຄົນລາວ

ເພື່ອເປັນຊາດລາວແລະເພື່ອມີອິສຣະພາບຂອງປະຊາຊົນລາວໃນທົ່ວປະເທດ ການຕໍ່ສູ້ທີ່ປະວັດສາດໄດ້ບັນທຶກໄວ້ແລະຮັບຮູ້ຖືກຕ້ອງກໍຄືປວັດເຜົ່າງການ ຕໍ່ສູ້ອິສຣະພາບ

ການຕໍ່ສູ້ເຮັດໃຫ້ມີການປຽ່ນແປງແລະທຸກການປຽ່ນແປງ ມາຈາກ ການຕໍ່ສູ້ທີ່ອົດທົນແລະອົງອາດກາ້ຫານຂອງລາວທຸກຊົນເຜົ່າ

ການຕໍ່ສູ້ໃນປະເທດລາວນັ້ນກໍ່ຄືການຕໍ່ສູ້ໃນບອ່ນອື່ນໆຂອງໂລກ ຈັກບໍ່ມີການຢຸດ ເຊົາໄດ້ຕາບໃດສັນຕິພາບ ອິສຣະພາບແລະຄວາມເປັນເອກຣາຊຫາກບໍ່ເກີດຂື້ນ ປະເທດລາວແມ່ນດິນແດນມໍຣະດົກຂອງເຊື້ອຊາດລາວບໍ່ມີໃຜຈະສາມາດທີ່ຈະ ມາຍາດຊິງເອົາໄປໄດ້ ຄືວາ່ຜູ້ນີ້ຕາຍໄປຕອ້ງມີຜູ້ໃໝ່ລຸກຂື້ນຕໍ່ສູ້ແລະຈະທໍາການ ຕໍ່ສູ້ຕໍ່ໄປຈົ່ນກວາ່ ເລືອດລາວຈະໂຮມກັນໄດ້ແລະຢູ່ໃນສັງຄົມອັນເປັນທັມແລະກໍ່ ການດໍາລົງຊີບຢູ່ໃນຮີດຄອງອັນດຽວກັນຄົນລາວຕອ້ງໄດ້ໄຊຊະນະ ແລະຈົ່ງເປັນຂອງປະຊາຊົນຕຣອດການ

ໃນປີ ຄສ 1950 ການກູ້ຊາດຂອງລາວເຣີ້ມອອ່ນລົງແລະອອ່ນລົງສວ່ນບັນດາ ຊາວລາວທີ່ຮັກຊາດຫລາຍຄົນ ໄດ້ຂາ້ມໄປຝັ່ງຊາ້ຍເພື່ອທໍາການຕໍ່ສູ້ຕໍ່ໄປ ບັນດາຜູ້ ທີ່ໄປໃນເວລານັ້ນຂາ້ພະເຈົ້າຍັງຈື່ໄດ້ເປັນບາງຄົນ ຄື ນາຍພົລພົມມາ ດວງມາລາ ນາຍພົລຈໍານຽລ ທາ່ນສົມສີ ເດຊາກັມພູ ທາ່ນກັມມາ ພົມກອງ ທາ່ນຈະເຣີນດວງ ຈັນແລະຜູ້ອື່ນໆອີກ ສວ່ນບັນດາຜູ້ທີ່ກາ່ວມານັ້ນ ກໍ່ຄື ນາຍພົລພົມມາ ດວງມາລາ ໄດ້ຖືກແຜວຂາ້ຖິ້ມໃນປີ ຄສ 1966 ຢູ່ທີ່ດົງຄັນທຸງ ສວ່ນທາ່ນຈໍານຽລເປັນຫົວໜາ້ ສານທະຫານຢູ່ນໍາພວກທຸ່ນຂາຍຊາດທາ່ນສົມສີ ເດຊາກັມພູ ເປັນຣັຖມົນຕຣີຊວ່ຍ ວາ່ການກະຊວງວັທນະທັມທາ່ນກັມມາ ພົມກອງ ເປັນຜູ້ອໍານວຍການສິລປະກອນ ທາ່ນຈະເຣີນ ພວງຈັນ ເປັນລູກບາ້ນຍະໂສທອນເປັນອະທິບໍດີກົມວິທະຍຸກະຈາ່ຍ ສຽງ ພໍຕໍ່ມາໄດ້ຊາບຂາ່ວມາວາ່ເສັຽຊີວິດໄປແລ້ວຍອ້ນແຜວເໜືອຄອມມຸນິສຂາ້ຖິ້ມ ຮຽນທາ່ນທຸກໆຄົນຂໍໃຫ້ມີໂອກາດອາ່ນທາດແທ້ຂອງວຽດນາມຄອມມູນິສທາ່ນຄົງ ເຂົ້າໃຈຂອງຄວາມຕອ້ງການແລະຄວາມພະຍາຍາມ ຂອງວຽດນາມ

ໃນການດັບສູນຊາດລາວເຮົາອັນນີ້ເພື່ອໃຫ້ທ່ານໄດ້ເຫັນແຈ້ງ ເລກົນຂອງແກວທີ່ທຸກເວລາພວກເຂົາພະຍາຍາມກືນກິນຊາດລາວແລະດັບສູນຊາດລາວ ດັ່ງນັ້ນໃນໂອກາດນີ້ຂ້າພະເຈົ້າຂໍຍົກເອົາເຫດການໃນປີ 1700 ມາຮອດປີ 1800-ມາເວົ້າໃຫ້ທ່ານໄດ້ເຫັນແຈ້ງຕື່ມອີກເທື່ອນຶ່ງ

ໃນປີ 1700 ປະເທດລາວທັງໝົດໄດ້ຕົກເປັນເມືອງຂື້ນ 3 ຊາດ ຊຶ່ງມີຈີນ ວຽດນາມແລະສຍາມທຸກໆ ປີໄດລາວຕ້ອງນຳເອົາດອກໄມ້ຄຳ ດອກໄມ້ເງິນແລະຄວາຍງົວຊ້າງມ້າໄປຖວາຍພຣະເຈົ້າກຸງສຍາມເຖິງ 3 ປີໄດຕ້ອງໄດ້ນຳເອົາຄວາຍງົວຊ້າງມ້າໄປຖວາຍພຣະເຈົ້າກຸງອານາມແລະ 10 ປີໄດ ຕ້ອງເອົາຂີ້ເຜີ້ງ ງາຊ້າງແລະນໍແຮດໄປຖວາຍພຣະເຈົ້າກຸງຈີນ ເຄື່ອງຂອງທີ່ທຳນຳໄປນັ້ນຮອ້ງກັນໃນເວລານັ້ນວ່າສ່ວຍ ກ່ອນເມືອງລາວຈະຕົກເປັນເມືອງຂື້ນຂອງ 3 ຊາດມະຫາອຳນາດຫອ້ງຖິ່ນ ຄືແນວນັ້ນ ກໍເນື່ອງຈາກວຽດນາມໄດ້ຍົກທັບມາຕີລາວໂດຍເອົາໜ້າເຈົ້າໄຊອົງເວ້ມາເປັນຄັນຕາລະບັດ ຊຶ່ງດຽວກັນກັບພວກແກວນຳເອົາສູພານຸວົງໃນປີ 1975 ເມື່ອແກວຂ້າເຈົ້າສົມພູຖຶ້ມແລ້ວກໍແຕ່ງໃຫ້ເຈົ້າໄຊອົງເວ້ ປູຂອງເຈົ້າອະນຸ-ຂື້ນເປັນເຈົ້າຊີວິດແລະຊົງພຣະນາມວ່າ ໄຊຍະເສຖາທິ-2- ສ່ວນເຈົ້າກິ່ງກິສຣາຊກໍບໍ່ພໍໃຈ ເລີຍທຳການປະກາດເອກຣາຊຂື້ນກັບສຍາມທີ່ຫລວງພຣະບາງ ຫລານຂອງເຈົ້າສົມພູທີ່ເອົາໂຕໄປລີ້ຢູ່ເມືອງເຊໂປນ ຊື່ ເຈົ້າສອ້ຍ ສີສມຸດ ພຸດທັງກຸລ ເລີຍພາພັກພວກໄປຕັ້ງອານາຈັກໃໝ່ຂື້ນທີ່ຈຳປາສັກດ໌ ແລ້ວປະກາດຂື້ນກັບສຍາມ ເພື່ອສືບຕໍ່ເອົາລາວໄປເປັນຂອ້ຍຂ້າມາໄຊ້ ພວກສັດຕຣູສລຽວສລາດຫລາຍ ໃນການສ້າງຄວາມແບ່ງແຍກໃຫ້ເປັນ 3 ລາວມີການຂັດແຍ່ງແຂ່ງຂັນກັນຕຣອດມາຈົ່ນຮອດໃນປັດຈຸບັນ ລາວທີ່ມີແຜ່ນດິນຢູ່ນີ້ກໍຢູ່ກັນແບບນອນໜາມແລະແຕກກັນອອກເປັນກຸ່ມນອ້ຍກຸ່ມໃຫ່ຽ ສ່ວນລາວທີ່ບໍ່ມີແຜ່ນດິນຢູ່ກໍຍິ່ງໄປກັນໃຫ່ຽ ຈົ່ນມະນຸດໃນໂລກທີ່ຈະເຣີນດອ້ຍວິທະຍາສາດ ບໍ່ສາມາດຄຳນວນໄດ້ວ່າ ລາວມີຈັກຂບວນການແລະມີຈັກການຈັດຕັ້ງການແຕກແຍກຂອງຄົນລາວນັ້ນແມ່ນເປັນໂອກາດຂອງສັດຕຣູໄດ້ຊົມໄຊ້ຕົ້ມຄວາມສາມາດຂອງຕົນ ເພື່ອດັບສູນຊາດລາວ ໃຫ້ເຖິງທີ່ສຸດ ໃນປີ 1792 ແມ່ນເຈົ້າອະນຸຣຸດທະເຈົ້າແຜ່ນດິນຫລວງພຣະບາງ ໄດ້ທຳການຕົກລົງກັບເຈົ້າຟ້າ ເມືອງຊຽງ

ຮຸ່ງເຂດ 12 ຜັ່ນນາແລະອຳນາດການປົກຄອງພະມ້າໃນເວລານັ້ນເພື່ອຮ່ວມກັນປົດຢຶດເອົາເມືອງຊຽງໃໝ່ ລຳປາງເປັນເມືອງຂຶ້ນ ເພື່ອຮ່ວມກັນປົດແອກອອກຈາກສຍາມແລະຈະຍອມເປັນພັນທະມິດກັບພະມ້າ ເຈົ້າກຸງສຍາມຊົງສືບຊາມໄດ້ແຕ່ງໃຫ້ເຈົ້ານັນທະເສນພໍ່ຂອງເຈົ້າອະນຸໄປປາບເຈົ້າອະນຸຣຸດທະແລ້ວທຳການຈັບກຸມເຈົ້າອະນຸຣຸດທະ ເຈົ້າມັນທາຕຸຣາຊແລະເຈົ້ານາຄ ລົງໄປຖວາຍເຈົ້າກຸງສຍາມເມື່ອໄປຮອດກຸງສຍາມແລ້ວ ເຈົ້າອະນຸຣຸດທະ ໄດ້ຟ້ອງຕໍ່ເຈົ້າກຸງສຍາມວ່າເຈົ້ານັນທະເສນແລະພຣະບໍຣົມຣາຊາ ເຈົ້າເມືອງນະຄອນພະນົມໄດ້ຕິດຕໍ່ກັບແກວເພື່ອເຮັດສົງຄາມຕ້ານສຍາມໃນປີ 1794 ເຈົ້ານັນທະເສນແລະພຣະບໍຣົມຣາຊາເຈົ້າເມືອງນະຄອນພະນົມກໍໄດ້ຖືກຮ້ອງໂຕລົງໄປກຸງສຍາມເພື່ອຕໍ່ສູ້ຄະດີກັບເຈົ້າອະນຸຣຸດທະໃນປີ 1796 ເຈົ້ານັນທະເສນສູ້ຄະດີບໍ່ແພ້ ເລີຍນຳເອົາໄປຕັດຫົວຖິ້ມຢູ່ບາງກອກ ເຈົ້າອະນຸຣຸດທະເປັນຜູ້ແພ້ຄະດີ ກໍສະເດັດຄືນມາເປັນເຈົ້າແຜ່ນດິນຫລວງພຣະບາງ ສືບຕໍ່ໄປ ໃນປີ 1797 ເຈົ້າອິນທະວົງລູກຊາຍກົກຂອງເຈົ້ານັນທະເສນໄດ້ຂຶ້ນເປັນເຈົ້າຊີວິດລາວພາກກາງ ການຂັດແຍ່ງກັນຂອງເຈົ້າຊີວິດລາວເປັນມາເຊນນີ້ແລະການຂັດແຍ່ງກັນຂອງຊາວລາວກໍເປັນມາເຊນນີ້ທັງໝົດບໍ່ແມ່ນເພື່ອປະເທດຊາດແລະເພື່ອປະຊາຊົນຫຍັງ ແຕ່ແມ່ນເພື່ອຜົນປະໂຍດຂອງຝ່າຍຕົນແລະພັກພວກ ສ່ວນຖານະຂອງເຈົ້າຊີວິດລາວນັ້ນພຽງແຕ່ແມ່ນຕາແສງ ເກບພາສີ ເກບສ່ວຍ ໄປຖວາຍເຈົ້າອະນານິຄົມຫອ້ງຖິ່ນທີ່ນັ້ນ ກ່ອນການສູນເສັຽປະເທດຊາດໃນປີ 1975 ນັ້ນປະຊາຊົນລາວໄດ້ຂນານນາມ ພຣະບາດສົມເດັດພຣະເຈົ້າ ສີສວ່າງວັທນາວ່າ ຕາແສງປາກເຊືອກ ການຂນານນາມພຣະອົງເຊນນັ້ນ ຖ້າເອົາສັຈທັມມາເວົ້າກັນກໍຄົງຈະເໝາະສົມ ເຈົ້າຊີວິດລາວບໍ່ຮູ້ພາສາລາວ ທັມມະນູນຂຽນໃວ້ວ່າເຈົ້າຊີວິດຊົງຫລີ້ນການເມືອງບໍ່ໄດ້-ໃນຄຳວ່າຫລີ້ນການເມືອງບໍ່ໄດ້ ພຣະອົງເຂົ້າໃຈວ່າຮຽນການເມືອງແລະອ່ານການເມືອງບໍ່ໄດ້ ຈາກປີ 1792 ມາຫາປີ 1826 ກໍນັບວ່າເປັນເວລາ 34 ປີເຕັມໆ ໃນຕອນນີ້ເຈົ້າອະນຸວົງໄດ້ເຫັນປະຊາຊົນລາວຖືກກົດຂີ່ຂູດຮີດຫລາຍຂຶ້ນ ແລະຫລາຍຂຶ້ນຖ້າຈະໃຫ້ສຍາມດຳເນີນການໄປຕາມຄວາມຕອ້ງການຂອງພວກເພີ່ນແລ້ວປະເທດຊາດຕອ້ງຫລົ້ມຈົມໃນອະນາຄົດ ພຣະອົງຄິດ

ໄດ້ເມືອນີ້ ເຈົ້າອະນຸຈຶ່ງໄດ້ແຕ່ງດອກໄມ້ຄຳແລະດອກໄມ້ເງິນ ມອບໃຫ້ທູດນຳຂຶ້ນໄປສົມມາຄາຣະວະພຣະເຈົ້າມັນທາຕຸຣາຊ ເພື່ອຂໍໃຫ້ພຣະອົງລືມຄວາມເກົ່າຄວາມຫລັງ ທີ່ຜູ້ເປັນພໍ່ເປັນຜູ້ເຮັດຜິດມາແລະທັງໝົດແມ່ນຣັບໄຊ້ການດັບສູນຊາດລາວຂອງພວກສັດຕູ ເພື່ອຄວາມໄວ້ເນື້ອເຊື່ອໃຈກັນ ພຣະເຈົ້າມັນທາຕຸຣາຊ ໄດ້ນຳທູດຂອງພຣະເຈົ້າ ອະນຸວົງໄປຍັງວັດ ວິຊຸນ ພຣະມະຫາວິຫານເພື່ອສເວີຍ ນ້ຳສາບານທັງພຣະເຈົ້າມັນທາຕຸຣາຊແລະເອກອັຄຣາຊທູດຂອງພຣະເຈົ້າ ອະນຸວົງໄດ້ກ່າວພອ້ມກັນວ່າຖ້າສອງຣາຊບັນລັງ ຄື ຣາຊບັນລັງວຽງຈັນແລະພຣະຣາຊບັນລັງຫລວງພຣະບາງ ບໍ່ສັດຊື່ຕໍ່ກັນ ບໍ່ສັດຊື່ຕໍ່ຊາດແລະບໍ່ສັດຊື່ຕໍ່ແຜ່ນດິນລາວ ກໍໃຫ້ເທພດາ ອາຣັກຫລັກເມືອງຈົ່ງທຳການຫລັບສູນ 2 ບັນລັງໃຫ້ພິນາດໄປ ທັງໃນປະຈຸບັນແລະອະນາຄົດ ຂໍຂ້າເທີ້ນຫລັງຈາກນັ້ນ ທັງສອງກໍຄືນໄປຍັງວັງຫລວງແລະໄດ້ລົງນາມຮ່ວມໃນການຈະລຸກຂຶ້ນກູ້ເອກຣາຊຈາກສຍາມ ເອກອັຄຣາຊທູດຂອງເຈົ້າອະນຸວົງໄດ້ມາຮອດວຽງຈັນແລະໄດ້ນຳສັນຍາທີ່ໄດ້ລົງນາມກັນໄປຖວາຍພຣະເຈົ້າ ອະນຸວົງແລະເລົ່າຄວາມຈິງທຸກປະການຖວາຍພຣະອົງ ເຈົ້າອະນຸວົງ ພູມພຣະໄທເປັນພິເສສ ທີ່ເຫັນລາວກັບລາວສາມາດເວົ້າກັນໄດ້ແລະກໍບອກກັບທູດວ່າ ນັບແຕ່ນີ້ຕໍ່ໄປລາວຈະເປັນອິສຣະພາບຕຣອດການ ສ່ວນທາງຫລວງພຣະບາງ ພຣະເຈົ້າມັນທາຕຸຣາຊໄດ້ຊົງປຶກສາຫາຣືນຳຣາຊບໍຣິພານຂອງພຣະອົງ ກ່ຽວກັບໂຄງການແລະແຜນການກູ້ຊາດລາວຣາຊບໍຣິພານແລະມະຫາເສນາບໍດີ ໄດ້ຖວາຍວ່າ ພວກວຽງຈັນແມ່ນພວກງູ 2 ຫົວ ບໍ່ສົມຄວນທີ່ຈະໄປເຊື່ອພວກເຂົາຕອ້ງການແກ້ແຄ້ນທີ່ເຈົ້ານັນທະເສນຖືກຂ້າຕາຍໃນກຸງສຍາມຫລາຍກົ່ວ ດັ່ງນັ້ນຄວນນຳຄວາມນີ້ໄປແຈ້ງໃຫ້ກຸງສຍາມຊາບອາຈເປັນການດີ ຍອ້ນການຊື່ສັດຕໍ່ກຸງສຍາມເມືອນີ້ ພຣະເຈົ້າກຸງສຍາມ ຈະຕອ້ງມອບວຽງຈັນໃຫ້ພຣະອົງເປັນຜູ້ຄອບຄອງຕໍ່ໄປ ເມື່ອໄດ້ຊົງຊາບເມືອນັ້ນແລ້ວ ພຣະເຈົ້າມັນທາຕຸຣາຊ ກໍຊົງແຕ່ງໃຫ້ຣາຊໂອຣົດຂອງພຣະອົງຊົງພຣະນາມວ່າ ທາ້ວສຸກຂະເສີມ ນຳສັນຍາແລະຂໍ້ຄວາມຕ່າງໆລົງໄປຖວາຍພຣະເຈົ້າ ກຸງສຍາມໃຫ້ຊົງຊາບ ສາມປີຕໍ່ມາ ໃນປີ(1826)(ຫາ)1829)ໃນສາມປີນີ້ ພຣະເຈົ້າອະນຸວົງ ກໍປຣາໄຊສົງຄາມກູ້ຊາດແລະໄດ້ຖືກຂ້າທໍຣະມານກອນຈະຕາຍຢູ່ກຸງສຍາມນັບແຕ່ພຣະເຈົ້າອະນຸວົງ

ໄດ້ຖືກຈັບຂ້າຕາຍແບບທໍຣະມານໄປໃນກຸງສຍາມເມື່ອປີ 1829 ສ່ວນພຣະຣາຊບັນລັງຫລວງພຣະບາງ ກໍບໍ່ຄອ່ຍກ້າວໜ້າເທົ່າທີ່ຄວນເພາະມີຜີກວນບ້ານມາແຍ້ງເອົາເຈົ້າຜູ້ໄປໃຫ້ຜີຊາດອື່ນຂ້າກິນ ພໍຕົກມາຮອດປີ 1977 ໄດ້ມີແນວທີ່ເກີດຢູ່ເມືອງລາວພໍ່ເປັນແນວແມ່ເປັນລາວເຊິ່ງມີຊື່ວ່າ ໄກສອນພົມວິຫານ ກໍໄດ້ນຳເອົາພຣະເຈົ້າ ສຣີສວ່າງວັທນາຜູ້ເປັນເຫລັນຂອງພຣະເຈົ້າ ມັນທາຕຸຣາຊໄປຂ້າແບບທໍຣະມານໃຫ້ຕາຍທີ່ກາງປ່າໃນຂົງເຂດເມືອງວຽງໄຊແຂວງຫົວພັນພຣະອົງກໍຕາຍແບບທໍຣະມານເໝືອນພຣະເຈົ້າອະນຸວົງ ເປັນເວລາ 148 ປີຜ່ານມານັບແຕ່ມີພຣະເຈົ້າອະນຸວົງໄດ້ສຸຣະຄົດໄປນັ້ນກໍມາຮອດບັນ ດັບສູນຣາຊວົງທີ່ຄົນລາວຮອ້ງກັນວ່າ ຣາຊວົງລ້ານຊ້າງຮົ່ມຂາວແຕ່ປີ (1826)(ມາຫາ)(ປີ(1977)(ໄດ້ 148 ປີ ຄວາມຂັດແຍ່ງກັນຂອງກະສັດລາວໃນອະດີດແລະຜູ້ນຳໃນອະດີດ ໄດ້ສ້າງໂທດກັມໃຫ້ປະເທດຊາດແລະສ້າງໂທດກັມໃຫ້ປະຊາຊົນ ຜູ້ທີ່ເກີດມາພາຍຊອ້ຍແບບພວກເຈົ້າຂອ້ຍນີ້ຫລາຍປານໃດ ຄວາມຂັດແຍ່ງກັນຣະຫວ່າງພຣະເຈົ້າ ສີສວ່າງວົງແລະມະຫາອຸປຣາຊ ບຸນຄົງຜູ້ເປັນພໍ່ຂອງເຈົ້າ ສຸວັນນະພູມາແລະເຈົ້າສຸພານຸວົງ ທີ່ຍາດກັນຂຶ້ນເປັນເຈົ້າຊີວິດໄດ້ສ້າງໂທດກັມໃຫ້ພວກຄົນລາວເຮົາຄື ແນວໄດ-ສ່ວນແນວແລະໄທຍ໌ ພວກເຂົາພາກັນລົງມືດັບສູນຊາດລາວໃນປັດຈຸບັນນີ້ແມ່ນສືບເນື່ອງມາຈາກການຕໍ່ສູ້ກັນຂອງເຈົ້າສຣີສວ່າງວົງ ແລະເຈົ້າ ບຸນຄົງເຊິ່ງແມ່ນລູກຂອງທັງ 2 ພຣະອົງເປັນຜູ້ສືບມູນເຊື້ອຈົ່ນມາຮອດພຣະເຈົ້າສຣີສວ່າງວັທນາ ລູກຊາຍຂອງພຣະເຈົ້າສຣີສວ່າງວົງໄດ້ສຸຣະຄົດໄປເພາະຍອ້ນເຈົ້າສຸວັນນະພູມາແລະເຈົ້າສຸພານຸວົງ ທັງ 2 ເປັນລູກຊາຍຂອງເຈົ້າ ບຸນຄົງ ທີ່ໄດ້ຕາຍໄປນັ້ນແຕ່ໂທດກັມຂອງພວກເຂົານີ້ແລະຜູ້ນຳໃນປີ1977 ມານັ້ນຍັງບໍ່ຕາຍເທື່ອແລະຈະບໍ່ຕາຍໄດ້ຢ່າງງ່າຍດາຍພວກທີ່ກຳອຳນາດຢູ່ໃນລາວປັດຈຸບັນນີ້ ແມ່ນພວກໂຈນທີ່ສຸພານຸວົງເອົາມາລຽ້ງເກືອໃຫ້ເປັນລູກນອ້ງແລະໃຫ້ເປັນໜອນເຈາະໃສ້ຂອງຕົນໃນເມື່ອພວກໂຈນໄດ້ສືບຕໍ່ພາຣະຈິດຈາກສຸພານຸວົງແລ້ວ ພວກຄົນລາວກໍມີທາງດັບໄປຫລາຍກວ່າ-ດັ່ງທີ່ຂ້າພະເຈົ້າໄດ້ກ່າວມາແລ້ວວ່າ ເຈົ້າຊີວິດລາວແມ່ນຕາແສງເກັບສວ່ຍ ໃຫ້ບັນດາປະເທດມະຫາອຳນາດຫອ້ງຖິ່ນ ເຈົ້າຊີວິດລາວບໍ່ມີສິດອຳນາດໃດໆໃນການບໍຣິຫານບ້ານເມືອງ

ເຈົ້າຊີວິດລາວເຜັ່ນປະມຸກທຸ່ນຂອງຕ່າງປະເທດສຳຮັບປະຊາຊົນລາວພຣະອົງຢາກ ຂ້າໃຜກໍ່ໄດ້ຕາມໃຈມັກ ແຕ່ສຳຮັບຄົນຕ່າງປະເທດແລ້ວ ພຣະອົງຕອ້ງນົບຕົນພວກ ເຂົາຕຣອດເວລາ ພວກປະຊາຊົນລາວເຮົາມີຫລາຍແສນຄົນຈະໄດ້ເຫັນຮູບປັ້ນພຣະ ເຈົ້າອຸ່ນຄຳ ນົບຕົນທ່ານ ປາວີ ທີ່ຕັ້ງຢູ່ຫລັງວັດພຣະແກ້ວບັນດານັກສຶກສາລາວທີ່ ສາຍຕາສັ້ນໄດ້ພາກັນຈະເອົາຖີ້ມລົງນ້ຳໂຂງ ແຕ່ວາ່ທູດຝຣັ່ງເສສບອກວາ່ຖາ້ພວກ ເຈົ້າເອົາຮູບປັ້ນນີ້ຖີ້ມລົງນ້ຳໂຂງ ເຜັ່ນພວກເຈົ້າໂງ່ທີ່ສຸດແລະໂງ່ກວາ່ໂຕສັດອີກ ຮູບນີ້ເຜັ່ນສັນຍາລັກແຫ່ງຄວາມໂງ່ຂອງຜູ້ນຳພວກເຈົ້າແຕ່ບໍ່ເຜັ່ນພວກທ່ານໂງ່ ຄົນພວກນີ້ໄດ້ຍິນເຜອນັ້ນແລ້ວພວກບັນດານັກສຶກສາສາຍຕາສັ້ນກໍເລີຍຍອມ ຈຳນົນ ສວ່ນຮູບປັ້ນນັ້ນໃນປັດຈຸບັນນີ້ ໄດ້ເກັບໃວ້ ໃນບໍຣິເວນສະຖານເອກອັຄຣັຖ ສທູດຝຣັ່ງເສສ ໃນນະຄອນວຽງຈັນ ອັນນີ້ແລ້ວທ່ານຈະເຫັນຄວາມໂງ່ ຫຼື ຄວາມ ສລາດຂອງເຈົ້າຊີວິດລາວຫລາຍຂື້ນຕື່ມແລະພວກທີ່ເປັນຜູ້ນຳຕາ່ງໆ ກະຣຸນາໃຫ້ ຄົນລາວເຮົາຕິດຕາມຕໍ່ໄປຈົ່ນຮອດບັ້ນເຊັນສັນຍາແບ່ງປັນດິນແດນລາວແລະບັ້ນ ຍົກດິນລາວໃຫ້ປະເທດນັ້ນແລະປະເທດນີ້ ພຣະເຈົ້າຊີວິດລາວ ພຣະອົງເຮັດຫຍັງຢູ່ ແລະຜູ້ນຳຕາ່ງໆ ພາກັນເຮັດຫລັງຢູ່

<u>**ສັນຍາສຍາມ-ຝຣັ່ງເສສ**</u>

<u>**ແບ່ງແຍກດິນລາວ**</u>

ໃນປີ-1893- ຫລັງຈາກເຈົ້າອະນຸວົງໄດ້ສຸຣະຄົດໄປເປັນເວລາ-64-ປີສະພາບ ການຂອງພຣະຣາຊອານາຈັກລາວ ຍິ່ງສັບສົນວຸ້ນວາຍແລະຫຍຸ້ງຍາກຫລາຍ ທີ່ສຸດ ພວກໜັງຂາວໄດ້ຂຍາຍກວ້າງອານານິຄົມຂອງຕົນອອກໄປ ທົ່ວທຸກພາກ ພື້ນດິນຂອງໂລກ ບັນເຈົ້າຊີວິດລາວໃນ-2-ອານາຈັກ ຄື ອານາຈັກຫລວງພຣະ ບາງ ແລະ ອານາຈັກຈຳປາສັກດ ີ ຕາ່ງກໍໝູບຢູ່ໃຕ້ພື້ນຕີນຂອງຕ່າງປະເທດຕຣອດ ມາ ເຈົ້າຈັນທະຣາຊ ເຈົ້າແຜ່ນດິນຫລວງພຣະບາງໄດ້ສຸຣະຄົດເມື່ອປີ-1872- ເຈົ້າອຸ່ນຄຳ ລູກຊາຍໄດ້ຂື້ນເປັນເຈົ້າຊີວິດແທນແລະຊົງພຣະນາມວາ່ ເຈົ້າມະຫີນ ທອນເທພນີພາພອນ ທ່ານຜູ້ນີ້ເຫລະ ເປັນຜູ້ທຳການນົບຕົນປາວີ ໃນພາກໃຕ້ຂອງ ລາວເວລານັ້ນ ພໍ່ແມ່ສຍາມໄດ້ຕັ້ງໃຫ້ທາ້ວຄຳສຸກລູກຊາຍຂອງທາ້ວຣຸຍ ຂື້ນເປັນ

ເຈົ້າແຜ່ນດິນລາວພາກໄຕ້ ແລະ ຊົງພຣະນາມວ່າ  ເຈົ້າຍຸຕິທັມມະທອນ ຄັນຮອດປີ-1893-ຈັກກະພັດຝຣັ່ງເສສແລະຈັກກະພັດສຍາມ ກໍໄດ້ທຳການສັນຍາແບ່ງດິນລາວກັນຄົນຣະເຄິ່ງ ເຈົ້າຊີວິດລາວ-2-ພຣະອົງ ຄືເຈົ້າມະຫິນທອນ ເທພນິພາພອນ ແລະພຣະເຈົ້າ ຍຸຕິທັມມະທອນ ທັງ-2-ເອົາໜ້າໄປລີ້ຢູ່ໃສຫຼືວ່າພວກພຣະອົງຢ້ານຕາຍຈຶ່ງໃຫ້ປະເທດຊາດສູນເສັຽຫຼືວ່າ ເຊີນມັນເສັຽໄປແລະສ່ວນປະຊາຊົນຈະຖືກກົດຂີ່ຂູດຮີດທີ່ໄດກໍເຊີນຕາມໃຈສັ້ນບໍ ວ່າແຕ່ຂໍໃຫ້ເຮົາພຣະອົງ ໄດ້ນອນຢູ່ຜາສາດກອດນາງສນົມນອ້ຍກໍເປັນພໍ ນີ້ບໍ່ໃບໜ້າຂອງເຈົ້າຊີວິດລາວ ນີ້ບໍ່ນ້ຳໃຈພິຣະອາດຫານຂອງເຈົ້າຊີວິດລາວ ທີ່ຊົງເປັນຜູ້ນຳຂອງປວງຊົນລາວທັງຊາດ-ຄຳຖາມວ່າ-ປະຊາຊົນລາວຕອ້ງການຜູ້ນຳ ແບບໃນປະວັດສາດອີກບໍ່ ພວກລາວຕອ້ງຄຶດແລະຄຶດໃຫ້ຫລາຍໆ ປະເທດຊາດຖືກດັບສູນມາຈັກຮອ້ຍປີແລ້ວພວກເຮົາຍັງເຂົ້າໃຈຄວາມເປັນຈິງຢູ່ບໍ່ ໂລກເຂົາປຽ່ນແປງໄປໄກແສນໄກແລ້ວ ແຕ່ລາວພວກເຮົາຍັງບໍ່ເຂົາໃຈຕົນເອງແລະບໍ່ເຂົ້າໃຈອະນາຄົນຂອງປະເທດຊາດຢູ່ພວກເຮົາຈະຢູ່ເພື່ອນັ່ງເບິ່ງໃຫ້ປະຊາຊົນລາວຕາຍດວ້ຍການກົດຂີ່ຂູດຮີດຈາກແກວແລະໄທອີກຕໍ່ໄປບໍ່ຫຼືວ່າ ຈະພາກັນນັ່ງຊົມເຊີຍຜົນງານຂອງແກວໄທ ທີ່ມາແບ່ງແຍກເອົາປະເທດລາວໄປຄອບຄອງຕຣອດໄປບໍ່ ຊາວລາວທັງໝົດທີ່ເກີດມາແລ້ວແລະຍັງບໍ່ທັນເກີດມາເມື່ອພວກທ່ານໄດ້ມີໂອກາດອ່ານປຶ້ມນີ້ພວກທ່ານຕອ້ງຕັດສິນໃຈລຸກຂື້ນເຮັດວຽກ ເພື່ອຄວາມເປັນລາວແລະເດັດຂາດຢ່າຢາກມີຊີວິດຢູ່ແບບປະວັດສາດລາວທີ່ທ່ານໄດ້ອ່ານມາແລ້ວນັ້ນ

ພຣະເຈົ້າມະຫາຊີວິດ ກຸງສຍາມ ໄດ້ຊົງແຕ່ງຕັ້ງໃຫ້ກົມຫລວງເທວະວົງສາວະໂຣປະການ ຄນາພະຍັນດອນມະຫາຈັກກຣີ-ນອ້ງຊາຍ-ທີ່ເປັນເສນາບໍດີຣັຖມົນຕຣີ-ກະຊວງການຕາ່ງປະເທດ ສວ່ນປະທານາທິບໍດີປະເທດຝຣັ່ງເສສໄດ້ແຕ່ງຕັ້ງໃຫ້ທ່ານ ເລີ ມຽກ ເດີ ວີແລກ-ເປັນຜູ້ຕາ່ງໜ້າຂອງຕົນລົງນາມເຊັນສັນຍາແບ່ງດິນລາວປັນກັນກິນ ດັ່ງມີເນື້ອຄວາມຕໍ່ລົງໄປນີ້

## <u>ສັນຍາແບ່ງດິນລາວ ຣະຫວ່າງ</u>
## <u>ປະເທດສຍາມແລະປະເທດຝຣັ່ງເສສ</u>

ມາດຕາ (1) ຣັຖບານສຍາມໄດ້ມອບເສັຽສລະຂໍ້ອຈ້າງທີ່ວ່າຕົນມີກັມມະສິດ
ແກ່ຜູ້ດຽວ ໃນດິນແດນທີ່ຢູ່ຕາມຝັ່ງຊ້າຍ ຂອງແມ່ນ້ຳຂອງ
ແລະໝູ່ດອນໃນແມ່ນ້ຳຂອງ

ມາດຕາ (2) ຣັຖບານສຍາມ ຈະບໍ່ຍອມເອົາເຮືອຣົບນ້ອຍໃຫ່ຽ ໄປແລ່ນໃນ
ທະເລສາບແລະໄປແລ່ນຕາມລຳແມ່ນ້ຳຂອງ ຫຼື ຕາມສາຂາ
ຂອງທະເລສາບແລະສາຂາຂອງລຳແມ່ນ້ຳຂອງ ພາຍໃນ
ຂອບເຂດທີ່ຈະກຳນົດໄວ້ຕາມມາດຕາຕໍ່ໄປນີ້

ມາດຕາ (3) ຣັຖບານສຍາມ ເດັດຂາດຈະບໍ່ສ້າງປ້ອມຄ້າຍແລະທີ່ໝັ້ນທາງ
ທະຫານໃນແຂວງ ບັດຕັມບອງ ສຽມຣຽມ ແລະ ເທິງຝັ່ງຂວາ
ຂອງແມ່ນ້ຳຂອງ ພາຍໃນ -25- ຫລັກກິໂລແມດ

ມາດຕາ (4) ພາຍໃນຂົງເຂດທີ່ກ່າວໄວ້ໃນມາດຕາ-3-ການຣັກສາຄວາມ
ປອດໄພໃຫ້ແກ່ປະຊາຊົນ ຈະຕອ້ງຖືກປະຕິບັດຕາມຮີດຄອງ
ປະເພນີ ໂດຍພະນັກງານຂອງເມືອງນັ້ນໆໃນຈຳນວນຈຳກັດ
ຫ້າມບໍ່ໃຫ້ມີກອງກຳລັງປະກອບອາວຸດທະຫານປະຈຳການ
ຫຼື ທະຫານເກນ ໄປຕັ້ງຢູ່ຂົງເຂດນັ້ນ

ມາດຕາ (5) ຣັຖບານສຍາມ ຈະຕອ້ງທຳການເຈຣະຈາກັບຣັຖບານປະເທດ
ຝຣັ່ງເສສອີກພາຍໃນ -6- ເດືອນ ເພື່ອກະກຽມການເກບພາສີ
ອາກອນ ແລະ ເພື່ອທຳການແກ້ໃຂສັນຍາປີ -1856- ສັນຍາ
ປີ -1856- ນັ້ນແມ່ນສັນຍາຫຍັງກັນ ຍັງຊອກຫາບໍ່ພົບ -ໃນເວລາ
ທີ່ຍັງບໍ່ທັນເຈຣະຈານັ້ນ ຫ້າມບໍ່ໃຫ້ເກບພາສີໃດໆຈາກປະຊາຊົນ
ໃນດິນແດນທີ່ກ່າວໄວ້ໃນມາດຕາ-3-ຝຣັ່ງເສສ
ຈະເປັນຜູ້ອອກເງິນເສັຽ ຄ່າພາສີໃຫ້ເອງ

ມາດຕາ (6) ການແລ່ນເຮືອໃນແມ່ນ້ຳຂອງ ອາດມີຄວາມຈຳເປັນໃນການ
ກໍ່ສ້າງແລະຈັດຕັ້ງທ່າຈອດເຮືອ ສາງມຽ້ນໄມ້ແລະສາງມຽ້ນ
ຖ່ານຫີນ ຣັຖບານສຍາມຕອ້ງອຳນວຍ ຄວາມສະດວກໃຫ້

ທຸກຢ່າງ ຕາມທີ່ທາງຝຣັ່ງເສສ ໄດ້ຮອ້ງຂໍ

ມາດຕາ (7) ຊາວຝຣັ່ງເສສ ຄົນພາຍໄຕ້ການບັງຄັບບັນຊາແລະຄົນພາຍໄຕ້ ການປົກຄອງຂອງຝຣັ່ງເສສ ມີສິດໄປມາຄາ້ຂາຍໄດ້ຢ່າງອິສຣະ ໃນດິນແດນທີ່ກ່າວໄວ້ໃນ ມາດຕາ-3-ກໍຕໍ່ເມື່ອພວກເຂົາໄດ້ຮັບ ໃບອະນຸຍາດເດີນທາງທີ່ອອກໃຫ້ ໂດຍເຈົ້າໜາ້ທີ່ຝຣັ່ງເສສ ສວ່ນປະຊາຊົນທີ່ມີພູມລຳເນົາໃນຂົງເຂດນັ້ນ ກໍຈະຕອ້ງ ມີບັດເດີນທາງແບບດຽວກັນ

ມາດຕາ (8) ຣັຖບານຝຣັ່ງເສສ ມີສິດທີ່ຈະຈັດຕັ້ງກົງສູນຂອງຕົນ ຂື້ນຢູ່ ບອ່ນໄດກໍໄດ້ ໃນຖານະທີ່ຈະເຫັນວາ່ ຈະເອື້ອອຳນວຍຜົນ ປະໂຍດໃຫ້ປະຊາຊົນ ພາຍໄຕ້ການບັງຄັບບັນຊາຂອງຕົນ ໂດຍສະເພາະແມ່ນທີ່ ໂຄຣາຊແລະແຂວງນາ່ນ

ມາດຕາ (9) ໃນເວລາທີ່ມີການສັບສົນ ໃນການຕີຄວາມໝາຍຂອງ ສັນຍານີ້ ໃຫ້ຖືເອົາສະບັບທີ່ເປັນພາສາຝຣັ່ງເສສ ສະບັບດຽວທໍ່ນັ້ນ ເປັນແມ່ບົດ

ມາດຕາ (10) ສັນຍາສະບັບນີ້ ຈະຕອ້ງປະຕິບັດໃຫ້ຄົບຖວ້ນພາຍໃນ ເວລາ-4-ເດືອນ ນັບແຕ່ມື້ທີ່ໄດ້ລົງເຊັນກັນເປັນຕົ້ນໄປ

ອັກຄະຣາຊທູດແລະອັກຄະຣັຖທູດຂອງ-2-ປະເທດ ທີ່ໄດ້ກາ່ວນາມມາແລ້ວ ໄດ້ຮວ່ມກັນລົງນາມແລະປະທັບຕາ ເຣັດທີ່ ວັງຣາຊວັນລົບ ບາງກອກ ວັນທີ-3-ຕຸລາປີ-1893-112-ປີແຫ່ງການສາ້ງຕັ້ງ ຣາຊວົງຈັກກຣີ

<u>ລົງນາມ ເລີ ມຽກ ເດີ ວີແລກ</u>

<u>ລົງນາມ ເທວະວົງສາ ວະໂລປະການ</u>

ໃນມື້ດຽວກັນນັ້ນ ທັງຝາ່ຍສຍາມແລະຝຣັ່ງເສສ ກໍໄດ້ເຊັນອະນຸສັນຍາ

ອະນຸສັນຍາ-ແມ່ນສັນຍາຈຳຕອ້ງປະຕິບັດ ຕາມສັນຍາ ກັນຕື່ມອີກ ຂາ້ພະເຈົ້າຂໍຍົກເອົາສັນຍານັ້ນ ມາໃຫ້ທາ່ນທຳການສຶກສາຄົ້ນຄ້ວ ມີດັ່ງຕໍ່ ລົງໄປນີ້-ກອ່ນທາ່ນຈະໄດ້ອາ່ນສັນຍາແລະອະນຸສັນຍານີ້ ຂາ້ພະເຈົ້າຂໍຮັບ

ສາຣະພາບກັບທ່ານວ່າ-ຂ້າພະເຈົ້າໄດ້ເກີດຢູ່ປະເທດລາວແລະເຕີບໃຫ່ຽຂື້ນຢູ່ໃນ
ປະເທດລາວ ບໍ່ເຄີຍເຫັນສັນຍາແລະອະນຸສັນຍານີ້ເລີຍເພາະພວກເຈົ້ານາຍຖື
ເປັນຄວາມລັບ ຖ້າຈະທຳການເຜີຍແຜ່ໃຫ້ປະຊາຊົນຮູ້ ກໍຄົງຈະຢ້ານປະຊາຊົນ
ບໍ່ນັບຖືພວກຕົນ ເພາະຍາມໃດ ພວກເຈົ້ານາຍລາວກໍວ່າຕົນເປັນຄົນເກັ່ງແລະ
ເປັນຄົນມີຄວາມສາມາດຜູ້ດຽວ ເພາະຕົນປາກໄດ້ຫລາຍພາສາແລະໄດ້ໄປຮຽນ
ມາຫລາຍປະເທດ ແຕ່ຄວາມຈິງກໍແມ່ນພວກຂີ້ເມືອເຕັມກະດົ້ງ ເພາະເປັນພວກ
ຫລອກລວງ ພວກຕົວະຕົ້ມປະຊາຊົນກິນ ພວກອັດຫູອັດຕາອັດປາກປະຊາຊົນແລະ
ພວກທີ່ຕອ້ງການໃຫ້ປະຊາຊົນໂງ່ຈ້າຫລ້າຫລັງເໝືອນດັ່ງແກວນາປີກຄອງນີ້

ຂ້າພະເຈົ້າ ແມ່ນລູກສິດວັດນັກຮຽນວັດແລະຂໍ້ຮອງເຖິງປະຊາຊົນ ຮູ້ສຶກພູມໃຈ
ທີ່ໄດ້ນຳເຣື້ອງນີ້ມາໃຫ້ທ່ານໄດ້ເບິ່ງໄດ້ເຫັນໃບໜ້າອັນແທ້ຈິງ ຂອງພວກເຈົ້າໆ
ນາຍໆ ທັງໃນປະຈຸບັນແລະອະດີດຂໍເຊີນທ່ານເບິ່ງເອົາແລະເຊີນຮຽນເອົາແດ່

**<u>ອະນຸສັນຍາຝຣັ່ງ-ສຍາມ-ໃນປີ-1893-</u>**

ມາດຕາ (1) ຄ້າຍທະຫານຕ່າງໆຂອງຝ່າຍສຍາມ ເທິງຝັ່ງແມ່ນ້ຳຂອງ
ກໍ້າຊ້າຍຈະຕອ້ງຖືກຖົກຖອນ ພາຍໃນເວລາຢ່າງຊ້າທີ່ສຸດ ບໍ່
ເກີນ-1-ເດືອນ ທັງນີ້ນັບແຕ່ເດືອນ ກັນຍາ ເປັນຕົ້ນໄປ

ມາດຕາ (2) ບັນດາຄ້າຍຄູຕ່າງໆໃນຂົງເຂດທີ່ໄດ້ກ່າວໄວ້ໃນ ມາດຕາ(3
ຂອງສັນຍາທີ່ໄດ້ລົງເຊັນກັນມື້ນີ້ນັ້ນ ຈະຕອ້ງ
ຖົກຖອນອອກໄປໃຫ້ໝົດ

ມາດຕາ (3) ໂຕການທີ່ປອງຮ້າຍທຸກຄົນໃນທົ່ງ ຊຽງຄຳ -12- ຈຸໄທຍ໌
ຫຼື ດຽນບຽນຟູ )ແລະ ຄຳມ່ວນ ຈະຕອ້ງຖືກພິພາກສາລົງໂທດ
ໂດຍຝ່າຍໄທຍ໌ແລະຜູ້ແທນນຶ່ງຂອງຝຣັ່ງເສສ ຈະຊ່ອຍໃນການ
ດຳເນີນການຕັດສີນຄວາມແລະກຳກັບການລົງໂທດໃຫ້ເປັນໄປ
ຕາມການຕັດສີນນັ້ນ ຣັຖບານຝຣັ່ງເສສ ສງວນສິດໃນການພິຈາ
ຣະນາວ່າໂທດ ທີ່ໄດ້ທຳການຕັດສີນໄປແລ້ວນັ້ນ ເໝາະສົມຫຼື ບໍ່
ຖ້າຫາກເຫັນວ່າຍັງບໍ່ທັນເໝາະສົມເທື່ອ ຈະທຳການຂໍຮອ້ງໃຫ້ມີ

ການຕັດສິນຄືນໃໝ່ໂດຍສານປະສົມ ເຊິ່ງຝຣັ່ງເສສ
ຈະເປັນຜູ້ຄັດເລືອກເອົາ ຕຸລາການແຕ່ຜູ້ດຽວ

ມາດຕາ (5) ບາງບຽງ ແລະ ຄະນະ ( ບາງບຽງ ຄຳຫລ້າແລະຄຳສານ ແມ່ນ ລູກຊາຍຂອງເຈົ້າຟ້າເມືອງໃລ່ເຂດທົ່ງຊຽງຄຳ ເຊິ່ງ ເຈົ້າມະຫິນ ທອນ ຈັບໂຕໂດຍກ່າວຫາວ່າຈະທຳການຂະບົດຕໍ່ສຍາມ ແລ້ວ ສົ່ງໂຕໃຫ້ເຈົ້າກຸງສຍາມໃນປີ-1887-ຜູ້ແທນກະຊວງການຕ່າງ ປະເທດສຍາມ ຈະນຳໄປມອບໃຫ້ສະຖານທູດຝຣັ່ງເສສພ້ອມທັງ ອາວຸດແລະທຸງຊາດຝຣັ່ງເສສ ທີ່ເຈົ້າໝ້າທີ່ສຍາມຍຶດໄວ້

ມາດຕາ (6) ຣັຖບານຝຣັ່ງເສສ ຈະທຳການຍຶດເອົາເມືອງຈັນທະບູຣີໄວ້ຕໍ່ໄປ ຈົນກວ່າຈະມີການປະຕິບັດຕາມສັນຍາສະບັບນີ້ ໂດຍສະເພາະ ຕອ້ງການມີການຖົກຖອນແລະສ້າງຄວາມສງົບສຸກໃນເຂດຝັ່ງ ຊ້າຍ ແລະອົງເຂດທີ່ໄດ້ກ່າວໃນມາດຕາ-3-ຂອງສັນຍາທີ່ໄດ້ ລົງເຊັນກັນໃນມື້ນີ້

ອັກຄະຣາຊທູດແລະອັກຄະຣາຊທູດທັງ-2-ຝ່າຍນັ້ນ ໄດ້ລົງເຊັນ ແລະຈ້ຳກາໄວ້ເປັນຫລັກຖານ

ເຮັດທີ່ ວັງຣາຊວັນລົບ ວັນທີ-3-ຕຸລາ ປີ-1893-
112-ປີ ແຫ່ງການສ້າງຕັ້ງຣາຊວົງຈັກກຣີ

ລົງນາມ)(ເລີ ມຽກ ເດີ ວີແລກສ໌

ລົງນາມ)(ເທວະວົງສາ ວະໂຣປະການ

ທ່ານຜູ້ອ່ານແລະຄົນລາວທີ່ຮັກແພງທັງຫລາຍ ໃນສັນຍາຄັ້ງ ວັນທີ-3-ຕຸລາປີ-1893-ນີ້ຝຣັ່ງເສສ ມີສິດປົກຄອງລາວໄດ້ແຕ່ຝັ່ງຊ້າຍແມ່ນ້ຳຂອງທໍ່ນັ້ນສວ່ນເມືອງ ຊຽງແສນ-ດຽວນີ້ແມ່ນຂື້ນກັບແຂວງຊຽງຣາຍຂອງໄທຍ໌-ປາກລາຍແກ່ນທ້າວ ແລະບໍ່ແຕນ ຂອງແຂວງຫລວງພຣະບາງ ຈຳປາສັກດ໌ ແລະສີທັນດອນ ຍັງຂື້ນ ກັບສຍາມ ໃນປີ-1904-ຝຣັ່ງເສສ ໄດ້ຮຽກຮອ້ງເອົາດິນທີ່ກ່າວມານັ້ນຈາກ ສຍາມ ສຍາມຈົນປັນຍາຈຶ່ງຍອມມອບໃຫ້ຝຣັ່ງເສສຕາມການສເນີ

## ໄທຍ໌ຮຽກຮ້ອງເອົາດິນລາວ
## ຈາກ
## ຝຣັ່ງເສສ

ໃນປີ-1940-ໄດ້ເກີດມີການຂັດແຍ່ງກັນ ຣະຫວ່າງໄທຍ໌ກັບຝຣັ່ງເສສ ໄທຍ໌ໄດ້ຍື່ນຍັດຕິຕໍ່ຝຣັ່ງເສສ-2-ເງື່ອນໃນ ຄື ເງື່ອນໃນທີ-1-ໄທຍ໌ ຮຽກຮ້ອງເອົາດິນລາວທີ່ຢູ່ຝັ່ງຂວາແມ່ນ້ຳຂອງ ຄື ແຂວງໄຊຍະບູຣີແລະຈຳປາສັກດ໌ ຄືນ-ເງື່ອນໃນທີ-2-ໄທຍ໌ຮຽກຮ້ອງເອົາດິນລາວທັງໝົດ ທີ່ຢູ່ຝັ່ງຊ້າຍແມ່ນ້ຳຂອງແລະດິນແດນຂອງປະເທດທັງໝົດ ໃຫ້ເປັນຂອງຕົນ

## ເງື່ອນໄຂໄທຍ໌

1/ ການທີ່ຝຣັ່ງເສສ ຍຶດເອົາດິນແດນແຂວງ ໄຊຍະບູຣີ ໃນປີ-1904-ນັ້ນ ເຫັນວ່າບໍ່ມີຄວາມຍຸຕິທັມ ເພາະໄທຍ໌ບໍ່ສາມາດໃຊ້ແມ່ນ້ຳຂອງໃນການຂົ້ນລອ່ງ
2/ ໄທຍ໌ເຫັນວ່າສາຍແດນໄທຍ໌ກັບອິນໂດຈີນນັ້ນ ຍັງທີ່ບໍ່ຈະແຈ້ງສົມຄວນທີ່ຈະເອົາສາຍແມ່ນ້ຳຂອງເປັນສາຍແດນຕຣອດໄປ
3/ ຖ້າຫາກຝຣັ່ງເສສຈະຖອນອອກ ຈາກອິນໂດຈີນແລ້ວ ຝຣັ່ງເສສຕ້ອງມອບດິນລາວແລະຂເມນໃຫ້ໄທຍ໌

## ໄທຍ໌ ກັບ ຝຣັ່ງເສສ

ຝຣັ່ງເສສ ຍອມປະຕິບັດຕາມຂໍ້ສເນີທີ-1-ຂອງໄທຍ໌ ນັ້ນກໍຄືຍອມແບ່ງສາຍແດນສອງປະເທດ ໃຫ້ເປັນໄປຕາມທັມມະຊາດ ໂດຍເອົາແມ່ນ້ຳຂອງເປັນບອ່ນແບ່ງເຂດແດນແລະໃຫ້ຖືເອົາຮອ່ງນ້ຳໃຫລເລິກໃນນ້ຳຂອງ ເປັນຈຸດສຳຄັນ ດັ່ງນັ້ນເອງ ຕາມສາຍແມ່ນ້ຳຂອງແຕ່ພາກໄຕ້ຂອງລາວ ຂຶ້ນມາຮອດເຂດແດນ ຈຳປາສັກດ໌ ພວກເຮົາຈຶ່ງປະກົດເຫັນປອ້ມທີ່ກໍ່ດວ້ຍດິນຊີມອງແຕ່ປອ້ມນັ້ນ ກໍຍັງບໍ່ທັນສາ້ງໃຫ້ແລ້ວ ຕຣອດສາຍແມ່ນ້ຳຂອງເທື່ອ

ການສເນີຂໍ້ທີ-2-ຂອງໄທຍ໌ ຝຣັ່ງເສສຍອມຍົກດິນແດນທາງຝັ່ງຂວາແມ່ນ້ຳຂອງ ທັງໝົດໃຫ້ແກ່ໄທຍ໌

ໃນຂໍ້ທີ-3-ຝຣັ່ງເສສ ກໍຕົກລົງວ່າຕົນຈະຍົກປະເທດລາວ ແລະ

ຂເມນ ໃຫ້ໄທຍ໌ ຖ້າຕົນໄດ້ຖອນອອກໄປ

ໃນເວລາດຽວກັນ ຝຣັ່ງເສສກໍກ່າວວ່າຕົນຈະທຳການປົກປັກຮັກສາອິນໂດຈີນ ຝຣັ່ງເສສຈົນສຸດຄວາມສມາດໃນທັນໃດ ຝຣັ່ງເສສກໍຍົນເອົາກອງທັບແລະອາວຸດຂອງຕົນມາຕັ້ງໄວ້ຕາມສາຍແດນອິນໂດຈີນແລະໄທຍ໌

ໃນວັນທີ-28-ພຶສຈິກາ ປີ-1939-ນັ້ນ ການຕໍ່ສູ້ກັນຣະຫວ່າງເຈົ້າອະນານິຄົມໄທຍ໌ ກັບ ເຈົ້າອະນານິຄົມຝຣັ່ງເສສ ກໍຣະເບີດຂື້ນເພື່ອຍາດເອົາຕອ່ນຊີ້ນລາວໄປກິນ ເໝືອນໃນປີ-1975-ທີ່ແກວຍາດກັບຈີນແດງພາກັນກິນຊີ້ນລາວ

° -ກອງທັບຊຽງໃໝ່ເຂົ້າຍຶດໄດ້ເມືອງຊຽງແສນ ແລະ ປາກລາຍ

° -ກອງທັບພາກອີສານ ແລະ ກອງພົລອຸບົລ ຍຶດໄດ້ແຂວງ ຈຳປາສັກດິ໌

-ກອງພົລ ສຸຣິນ ຍຶດໄດ້ ສົ້ມໂຮງ ແລະ ສຽມຣຽບ

° -ກອງທັບພາກຕາເວັນອອກ ຍຶດໄດ້ ສີໂສພົລ ແລະ ກອງພົລ ຈັນທະບູຣີ ຍຶດໄດ້ບ້ານ ກຸ່ມຣຽງ ບ້ານຫວ້ຍປອຍແປດ ແລະ ບໍ່ໄພລິນ

/ -ທາງພາກພື້ນທະເລ ກອງທັບເຮືອໄທຍ໌ ໄດ້ທຳການດັບສູນເຮືອຝຣັ່ງເສສຫລາຍລຳ ແລະ ເຮັດໃຫ້ຝຣັ່ງເສສຕອ້ງແລ່ນໜີຕາຍ

/ -ທາງອາກາດ ກອງທັບອາກາດໄທຍ໌ ໄດ້ນຳໝາກແຕກໄປຖິ້ມໃສ່ຄ້າຍທະຫານຝຣັ່ງເສສ ຫລາຍຈຸດໃນອິນໂດຈີນ

ການສູ້ຮົບກັນນັ້ນແມ່ນເພື່ອຍາດດິນລາວ ຂອງສອງຈັກກະພັດບໍ່ແມ່ນພວກສອງຈັກກະພັດຈະປອ້ງກັນດິນລາວ ເຊັ່ນແກວແດງແລະຈີນແດງໃນປັດຈຸບັນ ສະນັ້ນເຂົາຈິ່ງໄດ້ເຮັດຍາວນານມາຮອດວັນທີ-15-ມະກະຣາ ປີ-1940-ຈິ່ງໄດ້ສີ້ນສຸດລົງ ໂດຍແມ່ນຍີ່ປຸ່ນສເນີເປັນຜູ້ແກ້ໄຂແລະສອງຊາດຜູ້ຮຸກຮານກໍໄດ້ໄປຊຸມກັນຢູ່ນະຄອນໂຕກຽວ

ສັນຍາໂຕກຽວ ສະບັບລົງວັນທີ-9-ພຶສພາ ປີ-1940-ຝຣັ່ງເສສ ຍອມຍົກດິນແດນລາວຝັ່ງຂວາແມ່ນ້ຳຂອງ ທີ່ໄດ້ມາຈາກໄທຍໃນປີ-1904-ຄືນໃຫ້ແກ່ໄທຍ໌ ແລະ ຍອມຍົກດິນແດນ ສຽມຣຽບ ບັດຕັມບອງ ແລະ ສີໂສພົນທີ່ໄດ້ຈາກໄທຍ໌ ໃນປີ-1907-ຄືນໃຫ້ແກ່ໄທຍ໌ ໃນເວລານີ້ ເຈົ້າຊີວິດລາວພາກໄຕ້ແມ່ນເຈົ້າ

ຣາຊດາໃນ (ຫງຸຍ) ພຣະບິດາຂອງສະເດັດເຈົ້າ ບຸນອຸ້ມ ທາງພາກເໜືອແມ່ນພຣະເຈົ້າ ສີສວ່າງວົງ ທັງສອງພຣະອົງ ຊົງບັນທົມແບບສະບາຍພຣະອຸຣາໃນຜາສາດ ຢ່າງບໍ່ຮູ້ຮອ້ນຮູ້ໜາວຫຍັງໝົດເລີຍບໍ

ຢອ້ນກາ່ວຄືນຮອດປີ-1888-ລາວເຮົາໄດ້ສູນເສັຽທົ່ງເມືອງຄຳ ໃຫ້ແກວເໜືອແລະໄດ້ເສັຽ-12-ຜົ່ນນາລື້ໃຫ້ຈີນ ໂດຍຝຣັ່ງເສສລົງເຊັນສັນຍາແບ່ງແຍກເຂດແດນຈີນ ກັບລາວ

ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ມະຫິນທອນ ແຫ່ງອານາຈັກຫລວງພຣະບາງ ຍັງຊົງບັນທົມ ຍັງບໍ່ຕື່ນເທື່ອບໍ່ ດັ່ງນັ້ນພຣະອົງ ຈຶ່ງບໍ່ມີປາກມີສຽງຫຍັງຕໍ່ນາໆປະເທດ ຄື ເໝືອນໃນປັດຈຸບັນນີ້ບໍ່ຣັຖບານແມວລາວວາ່ຮັກຊາດມັນພາໄປຢູ່ໃສ່ເບີດຫຼືວາ່ພາກັນໄປດູຕີນສິ້ນໃໝຄຳນຳເຫລັກ-15-ຊັ້ນບໍ່

ໃນປີ-1907-ຈັກກະພັດຝຣັ່ງເສສຍົກເອົາດິນແດນ-2-ແຂວງຂອງລາວ ຄືແຂວງດາ່ນຊາ້ຍແລະແຂວງເລີຍໃຫ້ໄທຍ໌ ເພື່ອແລກເອົາ ບັດຕັມບອງກັບ ສີໂສພົນ ໄປໃຫ້ ຂແມນ ຕອນນີ້ ທາ້ວຄຳສຸກ ຫຼືວາ່ ພຣະບາດສົມເດັດພຣະເຈົ້າສັກກະຣິນແຫ່ງອານາຈັກຫລວງພຣະບາງ ສະເດັດໄປປະພາດປາ່ແຫ່ງໃດບໍ່ຊາບ ພຣະອົງຈຶ່ງມີດາວຽບຢູ່ຕາມເຄີຍ

ໃນປີ-1904-ພວກຈັກກະພັດຝຣັ່ງເສສ ໄດ້ຍົກເອົາດິນແດນ ກະແຈະຊຽງແຕງເວີນໄຊແລະລົມພັດໄປໃຫ້ ຂແມນແລະຍົກເອົາດິນແດນ ຄອ້ງຕຸ້ມຫຍ້າລາຍໄປໃຫ້ແກວ ພຣະບາດສົມເດັດພຣະເຈົ້າ ຣາຊດາໃນ ຄົງບັນທົມໃນຜາສາດ ຫຼືຄົງສະເດັດໄປຊົມສນົມກົມມະວັງ ໃນບາ້ນດອນຕະລາດ ກໍອາດຈະເປັນໄດ້ພຣະອົງອົງຈຶ່ງບໍ່ຄອ່ຍກາງວົນສົນໃຈນຳ ແມ່ນແທ່ນອັຍຄຽວເລີຍ

## ໄທຍ໌ ສົ່ງດິນແດນຄືນໃຫ້ລາວ

ໃນເວລາສົງຄາມໂລກເທື່ອທີ-2-ໃນປີ-1941-ຣັຖບານໄທຍ໌ ອັນມີຈອມພົລປພິບູລສົງຄາມ ເປັນນາຍົກ ໄດ້ປະກາດເຂົ້າກັບຝາ່ຍຍີ່ປຸ່ນ ແຕ່ປະຊາຊົນອັນມີກອງປະກອບອາວຸດ ເສຣີໄທຍ໌ ເຂົ້າກັບອາເມຣິກາແລະອັງກິສ ເມື່ອເປັນແນວນັ້ນແລ້ວ ທັງອັງກິສຈຶ່ງບີບບັງຄັບໃຫ້ໄທຍ໌ ເຈຣະຈາກັບຝຣັ່ງເສສ

ຄືນໃໝ່ ແຕ່ໄທຍ໌ ບໍ່ຍອມເຈຣະຈາກັບຝຣັ່ງເສສ ໂດຍອ້າງວ່າການຂັດແຍ່ງກັນ
ຣະຫວ່າງໄທຍ໌ ກັບອິນໂດຈີນນັ້ນ ເກີດຂຶ້ນກ່ອນຍີ່ປຸ່ນເຂົ້າມາໄທຍ໌ ໄທຍ໌ ແລະ
ຝຣັ່ງເສສໄດ້ຕົກລົງຮຽບຮ້ອຍແລ້ວ ໄທຍ໌ ຍິນດີເຈຣະຈາກັບອັງກິສທີ່ນັ້ນ ໃນກໍ
ຣະນີທີ່ຕົນນຳເອົາກອງທັບ ເຂົ້າໄປຢຶດເອົາເມືອງຊຽງຕຸງ ໃນຣັຖຊານ ປະເທດ
ພະມ້າຈາກອັງກິສ ອັງກິສໄດ້ຄູ່ອີ່ງວ່າຖ້າໄທຍ໌ ບໍ່ຍອມເຈຣະຈາຄືນໃໝ່ກັບ
ຝຣັ່ງເສສ ຈະທຳການຂັດຄ້ານໄທຍ໌ ບໍ່ໃຫ້ໄທຍ໌ ເປັນສະມາຊິກອົງການສະ
ຫະປະຊາຊາດ ດັ່ງນັ້ນໄທຍ໌ ຈຶ່ງຍອມເຈຣະຈາກັບຝຣັ່ງເສສ

ການເຈຣະຈາໃນຂັ້ນທຳອິດ ຝຣັ່ງເສສ ໄດ້ຮຽກຮ້ອງເຜວນີ້

1/ ສົ່ງດິນແດນພາກອີສານທັງໝົດ ໃຫ້ເປັນດິນແດນຂອງລາວເພາະອີ
ສານນີ້ ແມ່ນພາກສ່ວນນຶ່ງຂອງລາວທີ່ກິນເຂົ້າໜຽວຈ້ຳປາແດກ

2/ ສົ່ງພຣະແກ້ວມໍຣະກົດ ຄືນໃຫ້ລາວ

3/ ສົ່ງແຂວງໄຊຍະບູຣີ ແລະ ຈຳປາສັກດ໌ ຄືນໃຫ້ລາວ

4/ ສົ່ງສຽມຮຽບ ແລະ ບັດຕັມບອງ ຄືນໃຫ້ລາວ

ບັນຫາໃນຂໍ້ທີ-1-ທີ່ຝຣັ່ງເສສທວງເອົາອີສານຄືນໃຫ້ລາວນັ້ນສະຫະຣັຖອະເມຣິ
ກາຄັດຄ້ານ ເພາະດິນອີສານໄດ້ປົກຕອງໂດຍໄທຍ໌ ມາເຫິງແລ້ວແລະບໍ່ກ່ຽວຂ້ອງ
ກັບສົງຄາມໂລກເທື່ອນີ້ ຂໍໃຫ້ຝຣັ່ງຖອນຄວາມຮຽກຮ້ອງນີ້ສາ ທາງຝຣັ່ງກໍເຫັນດີນຳ

ກ່ຽວກັບເຣື່ອງ ພຣະແກວ ມໍຣະກົດ ນັ້ນ ທາງອະເມຣິກາໄດ້ທາບທາມກັບໄທຍ໌ ແຕ່
ໄທຍ໌ ໄດ້ປະຕິເສດຢ່າງເດັດຂາດ ດັ່ງນັ້ນອະເມຣິກາ ຈຶ່ງສັ່ງໃຫ້ຝຣັ່ງເສສຖອນ
ຄຳຮຽກຮ້ອງອີກ

ສຳຣັບຂໍ້ທີ-3-ແລະຂໍ້ທີ-4-ນັ້ນ ອະເມຣິກາ ກ່າວວ່າໄທຍ໌ ໄດ້ດິນນັ້ນມາໂດຍອາ
ໃສ ອຳນາດຂອງຍີ່ປຸ່ນດັ່ງນັ້ນຕ້ອງທຳການສົ່ງຄືນໃຫ້ຝຣັ່ງໂດຍດີ

ໃນວັນທີ-12-ຕຸລາ ປີ-1946- ທ່ານນາຍົກຣັຖມົນຕີ ພົລເຣືອຕີ ຫລວງ
ທຳລົງ ນາວາສວັສດີ ແຫ່ງປະເທດໄທຍ໌ ຈຶ່ງໄດ້ລົງນາມໃນສັນຍາໃໝ່ດັ່ງນີ້

1 / ຣັຖບານໄທຍ໌ແລະຣັຖບານຝຣັ່ງເສສ ໄດ້ເຫັນດີໃຫ້ຣັຖບານໄທຍ໌
ປະກາດວ່າ ສັນຍາສະບັບ ໃນວັນທີ-9-ພຶສພາ ປີ-1941-ທີ່ເຊັນກັນໃນ

ໂຕກຽວນັ້ນໄດ້ຖືກລົບລ້າງແລ້ວດັ່ງນັ້ນດິນແດນໄທຍ໌ ຍຶດເອົາຈາກຝຣັ່ງເສສ ຈຶ່ງຈຳຕ້ອງມອບຄືນໃຫ້ຝຣັ່ງເສສ ເພື່ອມອບໃຫ້ຣັຖບານລາວແລະຂເມນຕໍ່ໄປ

## ການເກີດຂອງລາວເສຣີອິ໊ນ

ການເກີດຂອງລາວເສຣີອິ໊ນ ໃນປີ-1936-ນັ້ນ ຫລັງຈາກການສຸຣະຄົດຂອງ ເຈົ້າ ອະນຸວົງ ຜ່ານມາໄດ້-107-ປີ ຫຼືຫລັງຈາກການເຊັນສັນຍາ ສຍາມ ກັບ ຝຣັ່ງເສສ ໃນການແບ່ງດິນລາວປັນກັນ ຜ່ານມາໄດ້-43-ປີ ສ່ວນບັນດາຊາວ ໜຸ່ມລາວ ຕ່າງກໍຍັງປາຖນາຢ່າງແຮງກ້າທີ່ຕ້ອງການໃຫ້ແຜນດິນລາວ ເປັນ ເອກພາບ ແລະ ມີເອກຣາຊ ກໍຄືອິສຣະພາບມາໃຫ້ປະຊາຊາດລາວທຸກທົ່ວໜ້າ ແລະທຸກຊົນຊາດຊົນເຜົ່າ ສ່ວນອົງການຊາວໜຸ່ມລາວໃນສມັຍນັ້ນ ໄດ້ຮ່ວມ ກັນຈັດຕັ້ງຂື້ນ ພວກເພິ່ນໃຫ້ຊື່ວ່າ **( ລາວໃຫຍ່ )**

ຄັນຕໍ່ມາຮອດເດືອນ ກັນຍາ ປີ-1939- ສົງຄາມໂລກເທື່ອທີ-2- ກໍໄດ້ ເກີດຂື້ນ ສ່ວນອົງການ ລາວໃຫຍ່ ໄດ້ປ່ຽນຊື່ມາເປັນອົງການ ລາວເສຣີອິ໊ນ ຕາມຄຳສເນີຂອງ ອັງກິສ

ສ່ວນອົງການ ລາວເສຣີອິ໊ນນີ້ ໃນສມັຍນັ້ນມີຜູ້ທີ່ສຳຄັນຢູ່-5-ທ່ານ ເຊັ່ນທ່ານ ຕຽງ ສີຣິຂັນ ຜູ້ບັນຊາການໃຫຍ່ ທ່ານ ເຄືອຂັນໄຊ ນະວຽງຈັນ ຮອງຜູ້ບັນຊາ ການຜູ້ທີ-1-ທ່ານ ທອງອິນ ພູຣິພັດ ຮອງຜູ້ບັນຊາການຜູ້ທີ-2- ທ່ານ ຈຳລອງ ດາວເຮືອງ ຫົວໜ້າເສນາທິການແລະ ທ່ານ ຖວິນ ອຸດົລ ຮອງຫົວໜ້າເສນາທິການ

ເມື່ອສົງຄາມໂລກ ໄດ້ຊີ້ນສຸດລົງໃນວັນທີ-2-ກັນຍາ ປີ-1955-ສ່ວນ ສຫະຣັຖອະເມຣິກາ ແລະ ອັງກິສໄດ້ສເນີໃຫ້ອົງການ ລາວເສຣີອິ໊ນ ແບ່ງ ອອກເປັນ-2-ພາກສ່ວນ ພາກສ່ວນທີນຶ່ງ ໃຫ້ຊື່ວ່າ ເສຣີໄທຍ໌ ພາກສ່ວນທີ ສອງ ໃຫ້ຮັກສາຊື່ເດີມໄວ້ - ພາກສ່ວນເສຣີໄທຍ໌ ມອບໃຫ້ທ່ານ ຕຽງສີຣິຂັນ ທ່ານ ທອງອິນພູຣິພັດ ທ່ານຈຳລອງດາວເຮືອງແລະທ່ານຖວິນອຸດົລ ເປັນຕົວແທນເພື່ອເຂົ້າໄປຈັດຕັ້ງຣັຖບານໃໝ່ໃນບາງກອກ ເພາະ-4-ທ່ານທີ່ກ່າວມານັ້ນ ໄທຍ໌ ບໍ່ສາມາດນຳເອົາເງື່ອນໄຂມາຂັດ

ມາລັດຄາຈັນໄດ້ ເພາະພວກເພິ່ນເອົາກຳເນີດໃນຝັ່ງຂວາ ຂອງແມ່ນ້ຳຂອງ

ພາກສ່ວນທີ-2-ໄດ້ມອບໃຫ້ແກ່ທ່ານ ເສືອຂັນໄຊ ນະວຽງຈັນ ເຊິ່ງໄດ້ແກ່ທ່ານ ອຸ່ມ ຊະນະນິກອນ ບິດາຂອງທ່ານ ອຸ່ມ ມີຊື່ວ່າ ທ່ານ ຂັນ ໄດ້ຮັບພຣະຣາຊທານເປັນຂຸ້ນຂຸນ ຈາກພຣະເຈົ້າກຸງສຍາມ ວ່າຂຸນຊະນະນິກອນ

ໃນປີ-1946-ບັນດາປະເທດມະຫາອຳນາດ ໄດ້ໄຊຊະນະໃນສົງຄາມ ແລະໄດ້ບີບບັງຄັບໃຫ້ ຈອມພົລ ປ ພິບູນສົງຄາມ ນາຍົກໄທຍ ລາອອກ ແລ້ວໃຫ້ຂບວນເສຣີໄທຍ ຈັດຕັ້ງຣັຖບານຂຶ້ນ ສ່ວນຄະນະເສຣີໄທຍ ໄດ້ເລືອກເອົາພົລເຮືອຕີ ຫລວງທຳຣົງ ນາວາສວັດດີ ຂຶ້ນເປັນນາຍົກ ທ່ານ ຕຽງ ສີຣິຂັນ ທ່ານ ທອງ ອິນພູຣິພັດ ທ່ານຈຳລອງດາວເຮືອງແລະທ່ານຖວິນ ອຸດົລ ກໍໄດ້ຖືກຄັດເລືອກໃຫ້ເປັນຄະນະຣັຖບານໃນຊຸດນີ້

ທັງ-4-ທ່ານໄດ້ສເນີໃຫ້ແຍກອີສານອອກເປັນເອກຣາຊ ອາໃສຄວາມອອ່ນເພັຽຂອງປະເທດໄທຍ ທີ່ປະກາດເຂົ້າກັບຍີ່ປຸ່ນ ຣັຖບານອັງກິສ ໄດ້ບີບໃຫ້ໄຊ້ໜີ້ສົງຄາມ ທີ່ໄທຍ ຍົກທັບໄປຕີນະຄອນ ຊຽງຕຸງ ແລະ ອະນຸຍາດໃຫ້ກອງທັບຍີ່ປຸ່ນໄຊ້ແຜ່ນດິນໄທຍ ຜ່ານລົງໄປຕີ ມາເລເຊັຽແລະສິງກະໂປ

ຫລວງທຳຣົງ ນາວາສວັສດີ ຈຶ່ງຍອມຈຳນົນຕາມຂໍ້ສເນີ ຂອງ 4-ຣັຖມົນຕີອີສານຢ່າງງ່າຍດາຍ ແລະກະກຽມຫາ່ງຫາໃນການແບ່ງສາຍແດນກໍຄືຍົກຍຈ້າຍຣາຊການທີ່ເປັນໄທຍ ອອກຈາກພາກອີສານ

ໃນປີ-1947-ກອ່ນການປະກາດເອກຣາຊພຽງ-5-ເດືອນ ຈອມພົລ ປ ພິບູລສົງຄາມ ໄດ້ເຮັດການປະຕິວັດຂຶ້ນແລ້ວທຳການຈັບກຸມແລະດັບສູນລາວເຊຣີສົນທຸກຄົນ ເທົ່າທີ່ສາມາດສືບຮູ້ໄດ້ ໃຜກໍຕາມທີ່ຍ່າງໄປຕາມຖນົນໃນບາງກອກ ຖ້າຫາກມີຜູ້ໃດເວົ້າຄວາມລາວ ຫຼື ສະແດງໂຕວ່າເປັນຄົນລາວ ຄົນໆນັ້ນແມ່ນຕອ້ງຖືກຈັບແລະນຳໄປຂ້າຖິ້ມໂດຍບໍ່ມີການໄຕ່ສວນໃດໆທັງນັ້ນ

4-ຄະນະຣັຖມົນຕີ ອີສານນີ້ ໄດ້ຖືກລອບຂ້າຕາຍເຫືອລະຄົນສອງຄົນ ນອກຈາກນັ້ນກໍໄດ້ແຕກເຂົ້າປ່າໄປໃຜໄປລາວ ແຕ່ໃນເວລານັ້ນກອງປະກອບອາວຸດລາວເສຣີຊົນຍັງມີຢູ່ຫລາຍກອງ ໄດ້ເຊື່ອງປືນໄວ້ປ່າ ແຕ່ເອົາໂຕ

ເຂົ້າບ້ານ ເພື່ອລໍໂອກາດທີ່ຈະອໍານວຍໃຫ້

ລາວເສຣີອົ້ນທັງ-2-ທີ່ນໍາໂດຍທ່ານ ອຸ່ນ ຊນະນິກອນ ໄດ້ທໍາການປຸ່ນ ຊື່ມາ ເປັນ **( ລ າ ວ ອິ ສ ຣ ະ )** ໃນປີ-1944-ເພື່ອເຊື່ອງອໍາການພົວພັນຂອງສອງ ແຜ່ນດິນລາວ ທີ່ຖືກຕັດຂາດໂດຍລາຍປາກການະຫາອຸບາດໃນເວລາທີ່ ທ່ານ ອຸ່ນ ຊນະນິກອນ ອອກທໍາການຕໍ່ສູ້ນັ້ນ ສະເດັດເຈົ້າເພັຊຣາຊ ຍັງບໍ່ທັນມີຄວາມ ສົນໃຈນໍາເອກຣາຊຂອງປະເທດຊາດເທື່ອ ແລະ ໃນປີນີ້ ພຣະອົງ ຊົງເປັນນາຍົກຣັຖມົນຕີຂອງຣາຊວັງ ຫລວງພຣະບາງ

ໃນເມື່ອທ່ານ ອຸ່ນ ຊນະນິກອນ ສາມາດປົດປ່ອຍໄດ້ແຂວງສວັນນະເຂດ ແລະ ຄໍາມ່ວນແລ້ວ ແລະພອ້ມດຽວກັນນັ້ນກໍນໍາເອົາກໍາລັງປະກອບອາວຸດ ລາວເສຣີອົ້ນ ໄປຕັ້ງຢູ່ວັດພຣະແກ້ວໂດຍການບັງຄັບບັນຊາຂອງທ້າວ ສິງ ຣັຕນະສມັຍ ເຊິ່ງໃນນັ້ນໄດ້ມີກອງກໍາລັງປະກອບອາວຸດຂອງທ່ານ ຕຽງ ສີຣິຂັນ ເຂົ້າໄປສົມທົບຈໍານວນນຶ່ງ

ສະເດັດເຈົ້າເພັຊຣາຊ ຄຶດວ່າທ້າວອຸ່ນຊນະນິກອນ ຕອ້ງມີແຜນໂຄນລົ້ມພຣະຣາຊ ບັນລັງໃນຂັ້ນຕໍ່ໄປ ຈຶ່ງໄດ້ປະກາດແຕ່ງຕັ້ງຣັຖບານລາວອິສຣະຂື້ນ ໃນວັນທີ-12 ຕຸລາປີ-1945-ໂດຍບໍ່ໄດ້ປຶກສາຫາລືກັບທ່ານ ອຸ່ນ ຊນະນິກອນ ກອ່ນເລີຍ ໃນຄະ ນະຣັຖບານລາວອິສຣະ ທີຈັດຕັ້ງຂື້ນໃນເວລານັ້ນ ປະກົດມີລາວເສຣີອົ້ນພຽງ-2 ທ່ານ ອັນມີທ່ານ ອຸ່ນຊນະນິກອນແລະທ່ານ ທັນ ໄຊຍະສິດເສນາ ທໍ່ນັ້ນກາຍ ນັ້ນແມ່ນສມັກພັກພວກ ຂອງສະເດັດເຈົ້າ ເພັຊຣາຊ ທັງນັ້ນ

## ລາຍຊື່ຣັຖບານ ລາວອິສຣະ

1-ພະຍາ ຄໍາມ້າວ ວິໄລ ນາຍົກຣັຖມົນຕີແລະວ່າການກະຊວງການຕ່າງປະເທດ
2-ທ່ານອຸ່ນຊະນະນິກອນຣັຖມົນຕີກະຊວງເສຖກິດແລະຜູ້ບັນຊາການທະຫານສູງສຸດ
3-ເຈົ້າ ສຸວັນນະພູມາ ຣັຖມົນຕີວ່າການກະຊວງໂຍທາ ແລະ ຂົນສົ່ງ
4-ເຈົ້າ ສົມສນິດ ຣັຖມົນຕີວ່າການກະຊວງພາຍໃນແລະຍຸຕິທັມ
5-ທ້າວ ກະຕ່າຍ ໂດນສະໂສຣິດ ຣັຖມົນຕີວ່າການກະຊວງການເງິນ
6-ທ້າວ ຫງູຍ ອະໄພ ຣັຖມົນຕີວ່າການ ກະຊວງສຶກສາ

7ຸ-ເຈົ້າ ສຸພານຸວົງ ຣັຖມົນຕີວ່າການ ກະຊວງໂທຣະຄົມມະນາຄົມ
8ຸ-ພັນຕີ ສິງ ຣັດຕະນະສມັຍ ຣັຖມົນຕີວ່າການກະຊວງປອ້ງກັນປະເທດ
9ຸ-ທາ້ວ ທັມ ໄຊຍະສິດເສນາ ຣັຖມົນຕີຊ່ອຍວ່າການກະຊວງ ປອ້ງກັນປະເທດ
10ຸ-ທາ້ວ ເກື່ອງ ປະທຸມຊາດ ຣັຖມົນຕີຊ່ອຍວ່າການກະຊວງເສຖກິດ
11ຸ-ພະຍາ ອຸ່ນເຮືອນ ນໍຣະສິງ ຣັຖມົນຕີຊ່ອຍວ່າການກະຊວງຍຸຕິທັມ

ໃນເວລາທີ່ປະກາດແຕ່ງຕັ້ງຣັຖບານ ລາວອິສຣະ ນີ້ ເຈົ້າສຸພານຸວົງ ໄດ້ຢູ່ປະເທດວຽດນາມແລະໄດ້ຄືນມາລາວໃນເດືອນ ກຸມພາ ປີ-1946-ເມື່ອມາຮອດແລ້ວກໍມາຍາດເອົາຕໍາແໜ່ງກະຊວງຕາ່ງປະເທດ ຈາກນາຍົກໄປແລະຍາດເອົາຜູ້ບັນຊາການທະຫານສູງສຸດຈາກທ່ານ ອຸ່ນ ຊນະນິກອນໄປໃນເດືອນ ເມສາ ປີ 1946-ຝຣັ່ງເສສບຸກຍຶດເອົາວຽງຈັນ ໄດ້ຄະນະຣັຖບານລາວອິສຣະ ໂຕນຂາ້ມໄປ ສີຊຽງໃໝ່ ໃນເວລານີ້ເອງ ສະເດັດເຈົ້າ ເພັຊຣາຊໄດ້ເຂົ້າຮວ່ມໃນຂບວນການ ເພື່ອເອົາເປັນສາກບັງໜາ້ໃນການຕໍ່ສູ້ເທົ້ານັ້ນ

## ບັ້ນອາວະສານ ຂອງ ລາວອິສຣະ

ຈອມພົລ ປ ພິບູນສົງຄາມ ໄດ້ທໍາການປະຕິວັດໂຄ່ນລົ້ມຣັຖບານ ຫລວງທໍາຣົງນາວາສວັສດິ ເມື່ອປີ-1947-ວຽກທໍາອິດຂອງຈອມພົລ ປ ພິບູນສົງຄາມແມ່ນທໍາການຈັບກຸມຄະນະລາວເສຣີອົບ ໂດຍກາ່ວຫາວາ່ເປັນພວກຂບົດຊາດ
ທາ່ນ ຕຽງ ສີຣິຂັນ ໄດ້ຖືກຈັບຂາ້ຕາຍກອ່ນໝູ່

ໃນປີ-1957-ຂາ້ພະເຈົ້າໄດ້ຮັບຄໍາສັ່ງ ຈາກພຣະທັມມະທີຣາຣາຊມະຫາມຸນີ ຫຼື ເອີ້ນວາ່ພຣະອາຈານ ມະຫາທີ ເຈົ້າອະທິການວັດສາມປື້ມໃຫ້ນໍາເອົາຈົດໝາຍໄປໃຫ້ໃຜຜູ້ນື່ງ ທີ່ຕໍາບົນ ສວາ່ງແດນດິນ ໃນປັດຈຸບັນເປັນອໍາເພີຢູ່ໃນແຂວງສາກົລນະຄອນ ຍາມນັ້ນເປັນຍາມກາງພັນສາເຊິ່ງພຣະສົງບໍ່ສາມາດອອກຈາກວັດໄປນອນແຮມຄືນໄດ້ ນອກຈາກມີເຫດການສໍາຄັນຄື ມີພໍ່ແມ່ບໍ່ສະບາຍ ອະນຸຍາດໃຫ້ໄປໄດ້ພຽງ-7-ຄືນ ໃນບັນຫານີ້ທາ່ນ ພຣະທັມມະທີຣາຣາຊມະຫາມຸນີ ບອກວາ່ໃນປະເທດຊາດລາວເຊິ່ງເປັນພໍ່ແມ່ຂອງພວກເຮົານັ້ນ ພວມບໍ່ສະບາຍແລະຮອມຈະຂາດໃຈຕາຍຢູ່ແລ້ວ

ດັ່ງນັ້ນ ທ່ານມະຫາກໍມີສິດໄປໄດ້-ໃນເວລານັ້ນ ພຣະທັມມະທິຣາຣາຊມະຫາມຸນີ ເປັນເລຂາສະພາການປົກຄອງສົງ ໃນພຣະຣາຊອານາຈັກເຊິ່ງເປັນຜູ້ສຳຄັນອົງ ນຶ່ງຂອງຄະນະສົງໄທຍ໌ ຂ້າພະເຈົ້າຈຶ່ງບໍ່ສາມາດ ທີ່ຈະທຳການປະຕິເສດໄດ້

ການທາງໄປໃນຍາມກາງພັນສານັ້ນ ປະຊາຊົນຫລາຍຄົນມັກສັງເກດເພາະ ເປັນການຜິດປົກຕິຂອງພຣະສົງ ພໍໃນຕອນເຊົ້າຂອງມື້ນັ້ນຣົຖໄຟດ່ວນ ສາຍກຸງເທບ ໜອງຄາຍໄດ້ໄປຮອດອຸດອນ ປະມານ-7- ມ ຊ ແລ້ວກໍໄປຂຶ້ນຣົຖໂດຍສານຕໍ່ໄປຍັງ ສວ່າງແດນດິນ

ໃນເວລາ-11- ມ ຊ ຂ້າພະເຈົ້າກໍໄດ້ຍ່າງເຂົ້າວັດສີສວ່າງແລະໄປຫາຈົວອົງ ນຶ່ງແລ້ວກໍໄດ້ຖາມຫານາຍ ຄູຄອງ ຈັນດາວົງ ອາຍຈົວກໍໄດ້ຊີ້ບອກເຮືອນຫລັງ ນຶ່ງທີ່ຢູ່ໃຕ້ວັດ ຫລັງຈາກຂຶ້ນໄປເຖິງເຮືອນເມັຽຂອງ ນາຍຄູຄອງ ຈັນດາວົງ ກໍ ແຕ່ງພາເຜນມາຖວາຍຫລັງຈາກສັນເຜນແລ້ວ ນາຍຄູຄອງ ກໍພາຍ່າງເຂົ້າໄປ ປ່າແລ້ວຍ່າງກາຍໄປກໍແມ່ນສວນໄມ້ຊ້າງໄຜໃນສວນນັ້ນ ສ່ວນນາຍຄູຄອງໄດ້ ປູກກົກມ່ວງໄວ້ຫລາຍ-100-ຕົ້ນ ໃນໄຕ້ຮົ່ມມ່ວງນັ້ນປະກົດເຫັນຕູບເຝົ້າສວນ ຢູ່ຫລາຍຕູບເຊິ່ງຢູ່ຫ່າງກັນພໍປະມານ

ໃນເວລານັ້ນຂ້າພະເຈົ້າໄດ້ຈົກເອົາຈົດໝາຍໃຫ້ນາຍ ຄູຄອງ ພອ້ມທັງຊອງສີ ນ້ຳຕານໃຫຽ່ຊອງນຶ່ງ ຫລັງຈາກເພີ່ນອ່ານຈົດໝາຍສຸດແລ້ວ ທາງນາຍຄູຄອງ ກໍໄດ້ເຄາະໄມ້-7-ບາດໃນເວລາຕໍ່ມາ ຂ້າພະເຈົ້າໄດ້ເຫັນຜູ້ຊາຍຈຳນວນ-10 ຄົນຍ່າງມາແລະອີກສອງຄົນຍ່າງໄປປາກທາງ ທີ່ຂ້າພະເຈົ້າຍ່າງເຂົ້າມານັ້ນສ່ວນ ນາຍຄູຄອງໄດ້ເວົ້າກັບຜູ້ຊາຍທັງ-10-ຄົນນັ້ນວ່າທາງບາງກອກໄດ້ສັ່ງໃຫ້ພວກ ເຮົາແຍກຍ້າຍກັນແລະການຕໍ່ສູ້ໃນຂັ້ນຕໍ່ໄປນັ້ນຈະຕອ້ງປຽ່ນຈາກອາວຸດໄປເປັນ ການຕໍ່ສູ້ທາງການເມືອງແລ້ວໃຫ້ພາກັນໄຊ້ປື້ມສໍຫລາຍກວ່າ ໃນສາຍຕາຂອງຂ້າ ພະເຈົ້າໄດ້ປະກົດເຫັນໃບໜ້າຫລາຍໆ ຄົນ ຕ່າງກໍພາກັນໂສກເສົ້າແລະຫງວ່ມ ເຫງົາຫລາຍ ສ່ວນນາຍຄູຄອງກໍໄດ້ຖາມຂ້າພະເຈົ້າວ່າ ມື້ໃດທ່ານມະຫາຈະກັບ ຄືນໄປບາງກອກ ຂ້າພະເຈົ້າໄດ້ຕອບວ່າ ຖ້າພໍເປັນໄປໄດ້ອາຕະມາຈະກັບ ໃນແລງມື້ນີ້ເອງ ທາງທ່ານຄູຄອງ

ໄດ້ກາ່ວຕໍ່ໄປວາ່ ມັນອາຈເປັນໄປບໍ່ໄດ້ ຍາ່ງນອ້ຍກໍຕອ້ງແມ່ນມື້ຮືຈື່ງຄອ່ຍໄປ ໄດ້-ຂາ້ພະເຈົ້າກໍໄດ້ນອນຢູ່ໃນສວ່ນກັບທາ່ນຄູຄອງແລະໝູ່ຫລາຍ-10-ຄົນ ພໍ ຕອນກາງຄືນມາມີພວກພໍ່ອອກໄດ້ພາກັນດັງໄຟຝີງຢູ່ຂາ້ງໆຖຽງ ທີ່ຂາ້ພະເຈົ້າ ນອນຢູ່ນັ້ນພວກເຮົາໄດ້ພາກັນຝີງໄຟຢູ່ ແຕ່ວາ່ ຄູຄອງ ເປັນຜູ້ເລົ່າປະວັດການ ຕໍ່ສູ້ໃຫ້ຟັງ ສວ່ນທາ່ນຄູຄອງໄດ້ຖືກຈັບໃນປີ-1947-ແລະໄດ້ຖືກປອ່ຍໂຕໃນປີ 1952-ທາ່ນໄດ້ເປັນນາຍໝວດໃນຂບວນການລາວເສຣີຊົນແລະໄດ້ຕັ້ງ ຖານ ທັບໃນດົງພຣະເຈົ້າພໍຕໍ່ມາໃນປີ-1956-ທາ່ນຄອງໄດ້ຖືກເລືອກຕັ້ງເປັນຜູ້ແທນ ຣາສດອນແຂວງສາກົລນະຄອນ ແຕ່ອາຍຸຜູ້ແທນຂອງທາ່ນມີພຽງ-7-8-ເດືອນ ເທົ້ານັ້ນ ທາ່ນຈອມພົລ ສະຣິສ ທະນະຣັຊກໍປະກາດລົບລາ້ງຖີ້ມໃນເດືອນ ພຶສພາ ປີ-1961-ທາ່ນຄູຄອງຈັນດາວົງກໍໄດ້ຖືກຈັບພອ້ມນາຍຄູທອງພັນ ສຸດທິມາດ ສວ່ນຄູທອງພັນສຸດທິມາດ ຂາ້ພະເຈົ້າບໍ່ເຄີຍໄດ້ພົວພັນມາກອ່ນຈື່ງບໍ່ຮູ້ວາ່ແມ່ນ ໃຜໃນເວລາ-9-ມ ກາງຄືນຂອງວັນທີ-30-ພຶສພາ-1961-ຈອມພົລສະຣິສທະ ນະຣັຊ ໄດ້ສັ່ງໃຫ້ນໍາເອົາທັງສອງຜູ້ຕອ້ງຫາໄປຍີງເປົ້າຖີ້ມຢູ່ເດີ່ນຍົນເກົ່າລາວ ເສຣີຊົນໃນບາ້ນສວາ່ງແດນດິນນັ້ນເອງ ໂດຍການຕູ່ຫາວາ່ເປັນຄອມມູນິສສວ່ນ ໜັງສືພີມສຍາມຣັຖສະບັບວິຈານລາຍອາທິດທີ່ອອກໃນເດືອນ ພຶສພາ ປີ-1995 ໄດ້ກາ່ວວາ່ໃນວັນທີ-11-ພຶສຈິກາ-1995-ແລ້ວນີ້ໃນຄອບຄົວແລະລູກ ເມັຽ ຂອງຄູຄອງແລະຄູທອງພັນໄດ້ພາກັນຂຸດເອົາກະດູກຂອງສອງທາ່ນທີ່ຖືກຟັງໄວ້ ໃນວັດປາ່ ສີສວາ່ງ ຂື້ນມາສູດຊັກອະນິຈານໍາ ເພື່ອສົ່ງວິນຍານເສຣີຊົນຂອງ ທາ່ນທັງສອງໄປຍັງສັມປະຣາຍະພົບ

ຂໍຣຽນເພື້ອນຮວ່ມຊາດທັງຫລາຍ ອັນທີ່ພວກເຮົາໄດ້ກາ່ວມານັ້ນຂໍໃຫ້ທາ່ນ ທັງຫລາຍນໍາເອົາໄປພິຈາຣະນາ ເພາະສະນັ້ນພວກເຮົາຈື່ງໄດ້ເວົ້າວາ່ ພວກຜູ້ ນໍາຢູ່ໃນປະເທດລາວແຕ່ອະດີດ ຫຼື ປະຈຸບັນພວກເພີ່ນເຮັດຫຍັງແນ່ຢູ່ແລະໃນປີ 1975-ມານີ້ ນັບຕັ້ງແຕ່ສະເດັດເຈົ້າສູພານຸວົງແລະທາ້ວໄກສອນພົມວິຫານເຂົ້າ ມາປົກປະເທດຊາດແລ້ວ ພວກມັນເຮັດຫຍັງຢູ່ຈື່ງມີແຕ່ແກວແດງແລະຈີນແດງ ເຂົ້າມາເຕມບາ້ນເຕມເມືອງແລະເຂົາໄດ້ມາເອົາປະເທດລາວໄປເປັນປະເທດ

ສາທາຣະນະລັດປະຊາທິປະໄຕປະຊົນລາວໄປນັ້ນແລະກໍຈັບເອົາຄົນລາວໄປຂ້າຖີ້ມ ພວກທ່ານໄປນອນຕາຍຢູ່ໃສ ຫຼື ວ່າພວກນີ້ພາກັນໄປຫາຊົມນາງສາວແກວແດງ ຢູ່ບໍ່ຈິ່ງບໍ່ສົນໃຈກັບປະເທດຊາດບ້ານເມືອງເລີຍ ຫຼື ວ່າພວກດັ່ງກ່າວນີ້ບໍ່ເປັນຄົນ ລາວຊັ້ນບໍ່ຈິ່ງບໍ່ມືນຕາເບິ່ງແນ່ວ່າຊາດນັ້ນມັນເປັນຍອັນອັນໃດແລະເປັນນຳຜູ້ ໃດກັນແທ້ ຕໍ່ມາຮອດປັດຈຸບັນນີ້ກໍຄືນາຍຄຳໄຕ ນາຍໝູ່ຮັກ ນາຍ ສມານ ນາຍ ບຸນຍັງແລະນາຍບົວສອນປັດຈຸບັນນີ້ພວກທັງ-5-ຄົນມັນເຮັດຫຍັງຢູ່ ຈິ່ງບໍ່ພາ ກັນມືນຕາເບິ່ງຊາດຂອງຕົນແນ່ຫຼືວ່າພວກມັນພາກັນໄປຫາຊົມສາວສໍ່ານອ້ຍ ຢູ່ຊັ້ນບໍ່ແລະຢ່າພາກັນເວົ້າອີກວ່າພວກຕົນເປັນຄົນຮັກຊາດຜູ້ດຽວ ອັນທີ່ເປັນ ຄົນຮັກຊາດນັ້ນມັນບໍ່ເປັນແບບພວກນີ້ ຖ້າຮັກຊາດແທ້ໆເປັນຫຍັງຈິ່ງໃຫ້ແກວມາ ຍາດແຍ່ງອາຊີບຂອງປະຊາຊົນລາວຫຼືວ່າຄົນທັງ-5-ນີ້ມັນເປັນແກວເບີດຊັ້ນບໍ່ ມັນຈິ່ງບໍ່ພາກັນເບິ່ງປະເທດຊາດບ້ານເມືອງຂອງຕົນແລະພວກມັນຍັງບໍ່ຖືສັຈະ ວາຈາວ່າໃຫ້ຊາວຕ່າງປະເທດອອກຈາກດິນແດນລາວໃນສັນຍາຕ່າງໆນັ້ນແຕ່ ໃນປັດຈຸບັນນີ້ຄືວ່າມີແຕ່ຄົນຕ່າງຊາດຫລາຍກົ່ວຄົນລາວຈົ່ນວ່າຄົນລາວໄດ້ພາ ກັນໄປເປັນຂອ້ຍໄຊ້ຊາວຕ່າງຊາດຫຼືເວົ້າວ່າໄປເປັນແມ່ຈ້າງນາງເລງໄປເປັນ ຂອ້ຍທາດຮັບໄຊ້ຊາວຕ່າງຊາດ ອັນນີ້ບໍ່ວ່າພວກ-5-ຄົນນີ້ໄດ້ພາກັນເວົ້າວ່າ ເນວລາວຮັກຊາດນັ້ນ ອັນນີ້ຂ້າພະເຈົ້າວ່າຖ້າແມ່ນຄົນທີ່ຮັກຊາດແທ້ໆນັ້ນມັນບໍ່ ເປັນແບບນີ້ ເພາະວ່າລາວທຸກໆຄົນມີຄວາມຮັກຊາດເບີດທຸກຄົນຢ່າເວົ້າວ່າແຕ່ ໂຕຄົນດຽວຮັກຊາດເລີ ສະຫາຽເອີຍ ເພາະໃນປັດຈຸບັນນີ້ ໃນປະເທດລາວນັ້ນ ມີແຕ່ໜ້າແກວແດງຈີນແດງແລະໄທຍ ເຂົ້າມາເຕັມບ້ານເຕັມເມືອງ ສວ່ນຄົນ ແທ້ໆນັ້ນ ໄດ້ອອກໄປເປັນຂອ້ຍຄົນຕ່າງຊາດເກືອບຈະໝົດແລ້ວ ອັນທີ່ຍັງອາດ ມີແຕ່ແກວແດງ ຈີນແດງແລະໄທຍຫລາຽກົ່ວຄົນລາວ(ອັນນີ້ພວກເຮົາຂໍຖາມ ວ່າ ລາວເສຣີຊົນເກົ່າໆ ລາວອິສຣະເກົ່າໆ ທັງລາວແດງທີ່ພຸພານຸວົງຕັ້ງຂຶ້ນມາ ແລະພວກເນວລາວທີ່ວ່າຕົນເປັນຄົນຮັກຊາດ ພາກັນໄປນອນດັບຢູ່ໃສກັນແທ້ນໍ

ຈາກສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ

ໃນນາມພັກປະຊາຊົນລາວອິສຣະ-ຄັ້ງວັນທີ-25-5-00-